# ພືດເສດຖະກິດຂອງເຂດພູດອຍ :
# *ບົດຮຽນກ່ຽວກັບໝາກແໜ່ງ*

ໂດຍ ທ່ານ ໂອລີວິເອ ດຸຍກວກຕິເອີ[1], ທ່ານ ຜູຍ ວິສອນນະວົງ[2] ແລະ ທ່ານ ຈຸລຽງ ໂຣຊາ[3]

## ຄຳສັບທີ່ສຳຄັນ

*ກະສິກຳ, ລາວ, ໄຮ່, ພືດເສດຖະກິດ, ປ່າໄມ້, ສະພາບແວດລ້ອມ, ໝາກແໜ່ງ*

## ໃຈຄວາມ

ປະຊາຊົນຊາວຊົນນະບົດ, ໂດຍສະເພາະກໍ່ແມ່ນປະຊາຊົນຊາວຊົນນະບົດຢູ່ລາວ, ໄດ້ຖືກກ່າວຫາມາຕະຫລອດ ວ່າ ເປັນຜູ້ທີ່ທຳລາຍສະພາບຄວາມອຸດົມສົມບູນຂອງປ່າໄມ້ເຂດຮ້ອນ. ແຜນການໃນການຫັນປ່ຽນຈາກຮູບແບບການຜລິດ ໂດຍວິທີການຖາງປ່າເຮັດໄຮ່ ໄປສູ່ຮູບແບບການຜລິດພືດໃຫ້ເປັນສິນຄ້າ ທີ່ຖືວ່າເປັນທາງອອກທີ່ດີໃນການປົກປັກຮັກສາສະພາບແວດລ້ອມຂອງປ່າໄມ້ ແລະ ທັງເປັນການຍົກສູງລາຍຮັບຂອງປະຊາຊົນຊາວຊົນນະ ບົດນັ້ນ ໃນໄລຍະຫລັງໆຜ່ານມານີ້ ມີແຜນການດັ່ງກ່າວຫລາຍອັນກໍ່ບໍ່ໄດ້ຕາມລະດັບຄາດໝາຍ ຫລື ບາງອັນກໍ່ມີຄວາມຫລົ້ມເຫລວ.

ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ (ຄພມຜ) ໃນໄລຍະຜ່ານມາໄດ້ເອົາໃຈໃສ່ໃນການປຸກລະດົມປະຊາຊົນ ໃຫ້ມາທຳການປູກໝາກແໜ່ງພັນ ເພື່ອສົ່ງອອກຂາຍໄປຍັງປະເທດຈີນ. ຜົນງານທີ່ມີ ກໍ່ຄືມີເນື້ອທີ່ປູກ ໝາກແໜ່ງແລ້ວ 300 ຮຕ, ການປູກໝາກແໜ່ງຄືດັ່ງກ່າວໄດ້ກວມເອົາແລ້ວຫລາຍກວ່າ 75 % ຂອງພົນລະເມືອງທັງໝົດຂອງເມືອງຜົ້ງສາລີ. ບົດຮຽນອັນສຳຄັນ ທີ່ຖອດຖອນມາໄດ້ຈາກການດຳເນີນງານໃນວຽກງານການປູກ ໝາກແໜ່ງດັ່ງກ່າວມີຄື : ເຮົາຕ້ອງໄດ້ໃຫ້ຄວາມສຳຄັນບັນຫາທາງດ້ານເສດຖະກິດຫລາຍກວ່າບັນຫາທາງດ້ານ ເຕັກນິກໃນການປູກຝັງ, ກ່ອນອື່ນເຮົາຕ້ອງໄດ້ເກັບກຳເອົາສະພາບການເຄື່ອນໄຫວທາງດ້ານການຕະຫລາດ, ເກັບກຳເອົາພາກສ່ວນຜູ້ດຳເນີນການ ແລະ ເກັບກຳເອົາຄວາມສ່ຽງ ແລະ ຜົນເສຍທີ່ມີໃນການຊື້ການຂາຍຂອງຜົນຜລິດນັ້ນ, ຕະຫລອດເຖິງໃຫ້ມີຄວາມເຂົ້າໃຈເຖິງຄວາມເປັນໄປໄດ້ຂອງການຜລິດໃຫ້ເປັນສິນຄ້າອັນໃໝ່ທີ່ຈະເຂົ້າ ໄປສັບຊ້ອນໃນລະບົບການຜລິດກະສິກຳແບບດັ້ງເດີມຂອງປະຊາຊົນບັນດາເຜົ່າ. ຕົວຈິງແລ້ວ ລະບົບການຜລິດແບບດັ້ງເດີມຂອງເຂົາເຈົ້າ ກໍ່ໄດ້ສືບຕໍ່ດຳເນີນມາຢ່າງມີທັດສະນະ... 

1 *ນັກຄົ້ນຄວ້າ ຂັ້ນດັອກໂຕຣາ ຈາກສະຖາບັນກະສິກຳແຫ່ງຊາດ ປາຣີ-ກຼີຍົງ (INA PG), olivier.ducourtieux@laposte.net.*

2 *ຜູ້ອຳນວຍການໂຄງການພັດທະນາຊົນນະບົດເມືອງຜົ້ງສາລີ (**ຄພມຜ**), cclpddp@laotel.com.*

3 *ວິສາວະກອນ ເສດຖະກິດ-ກະສິກຳ ຈາກອົງການ ເຊເຊແອັລ໌, ຜູ້ຊ່ວຍທາງດ້ານເຕັກນິກ ໃຫ້ແກ່ໂຄງການພັດທະນາຊົນນະບົດເມືອງຜົ້ງສາລີ (**ຄພມຜ**), cclpddp@laotel.com.*

## ພາກສະເໜີ : *ການຫັນປ່ຽນຈາກການເຮັດໄຮ່ໄປສູ່ການປູກພືດເສດຖະກິດ ເປັນວິທີການທີ່ເໝາະສົມກັບທຸກເຂດແຂວງແລ້ວບໍ່ ?*

ເວົ້າລວມແລ້ວ ໃນທົ່ວທຸກມູມໂລກ, ປະຊາຊົນທີ່ອາໄສຢູ່ໃນເຂດຊົນນະບົດຫ່າງໄກສອກຫລີກ ແລະ ເວົ້າສະເພາະຢູ່ລາວ ໄດ້ຖືກກ່າວຫາມາຕະຫລອດເວລາວ່າ ເປັນຜູ້ບຸກລຸກ ແລະ ທຳລາຍສະພາບຄວາມອຸດົມສົມບູນຂອງປ່າໄມ້ເຂດຮ້ອນ. ມີນັກຂຽນ ແລະ ນັກຄົ້ນຄວ້າຫລາຍຄົນໄດ້ຕຳນິວິຈານການຜລິດກະສິກຳດ້ວຍວິທີການຖາງປ່າເຮັດໄຮ່ ຊຶ່ງວິທີການຜລິດຄືດັ່ງກ່າວເຂົາເຈົ້າຖືວ່າເປັນໄພອັນຕະລາຍຕໍ່ອານາຄົດຂອງປ່າໄມ້ທີ່ມີໃນເຂດພູດອຍຂອງລາວ (UNDP 1995; WATERSHED 2000; NAFRI and CIRAD 2003; ວໍລະກຸນ 2003). ຕົວຈິງແລ້ວ ການຜລິດກະສິກຳດ້ວຍວິທີການຖາງປ່າເຮັດໄຮ່ໃນເຂດພູດອຍນີ້ ມັນມີຄວາມສຳຄັນຢູ່ບໍ່ໜ້ອຍຕໍ່ລະບົບເສດຖະກິດຂອງລາວ ຊຶ່ງເປັນປະເທດໜຶ່ງທີ່ມີເນື້ອທີ່ໆເປັນເນີນສູງ ຫລື ພູດອຍກວມເອົາເຖິງ 80 % ຂອງເນື້ອທີ່ທັງໝົດຂອງປະເທດ, ຈຳນວນຄອບຄົວທີ່ພົວພັນນຳການຜລິດກະສິກຳ ດ້ວຍວິທີການຜລິດຄືດັ່ງກ່າວແມ່ນມີຫລາຍກວ່າ 250 000 ຄອບຄົວ (ກະຊວງກະສິກຳ ແລະ ປ່າໄມ້ 1999) ຫລື ເທົ່າກັບ 35 % ຂອງປະຊາກອນທັງໝົດຂອງປະເທດ ທີ່ຈັດຢູ່ໃນຊົນຊັ້ນທີ່ທຸກຍາກທີ່ສຸດຂອງປະເທດ ແລະ ສ່ວນໃຫຍ່ແລ້ວຈະເປັນຈຳພວກຊົນຊາດຊົນ ເຜົ່າສ່ວນນ້ອຍທີ່ຕັ້ງຖິ່ນຖານຢູ່ໃນເຂດພູດອຍທີ່ຢູ່ຫ່າງໄກສອກຫລີກ ທາງພາກເໜືອ, ພາກຕາເວັນອອກ ແລະ ພາກຕາເວັນອອກສ່ຽງໃຕ້ຂອງປະເທດລາວ.

ການຊຸກຍູ້ ແລະ ປຸກລະດົມໃຫ້ປະຊາຊົນໃຫ້ຫັນມາປູກພືດເສດຖະກິດ, ການສົ່ງເສີມໃຫ້ປະຊາຊົນຫັນມາສູ່ກິດຈະກຳທີ່ສາມາດສ້າງລາຍຮັບ ຕະຫລອດເຖິງ ການສົ່ງເສີມໃຫ້ປະຊາຊົນຫັນມາເຮັດນາ ເປັນແນວທາງລວມທີ່ກຳນົດເອົາມານຳໃຊ້ໃນ ການດຳເນີນງານໜ້າວຽກຕົວຈິງໃນ ການຈັດຕັ້ງປະຕິບັດວຽກງານການພັດທະນາ ຊົນນະບົດ, ເພື່ອໃຫ້ບັນລຸໄດ້ບັນດາຈຸດປະສົງໃນການຕ້ານກັບຄວາມທຸກຈົນ ແລະ ການປົກປັກຮັກສາສະພາບແວດລ້ອມປ່າໄມ້ ຊຶ່ງສອງວັດຖຸປະສົງດັ່ງກ່າວ ອາດຈະບໍ່ກົມກຽວກັນ ຫລື ອາດຈະເປັນອັນຂັດກັນກໍ່ເປັນໄດ້ ຖ້າຫາກມີການກຳນົດຈຸດປະສົງເພື່ອຈຳກັດເນື້ອທີ່ໃນການຜລິດກະສິກຳລົງ ແລະ ເປັນການຜລິດແບບຄົງທີ່ໃນເຂດພູດອຍ. ການກຳນົດນະໂຍບາຍຄືດັ່ງກ່າວ, ໂດຍທີ່ບໍ່ມີການຄົ້ນຄວ້າລະອຽດຖີ່ຖ້ວນ, ກໍ່ຄິດເດົາເອົາໂລດວ່າ ປະຊາຊົນຈະສາມາດຂາຍຜົນຜລິດທີ່ໄດ້ມາຈາກການຜລິດໃຫ້ເປັນສິນຄ້າຈາກການລ້ຽງສັດ ຫລື ປູກຝັງ ແລະ ກໍ່ຄິດເອົາອີກວ່າ ດ້ວຍເງິນສົດທີ່ໄດ້ມາຈາກການຂາຍຜົນຜລິດນັ້ນເຂົາເຈົ້າກໍ່ຈະສາມາດນຳເອົາໄປຊື້ເຂົ້າກິນ ແທນທີ່ຈະເປັນການຜລິດເຂົ້າດ້ວຍວິທີການຖາງປ່າເຮັດໄຮ່ນັ້ນ

ໂດຍບໍ່ໄດ້ທຳການປຶກສາຫາລືກັນຢ່າງລະອຽດ, ການດຳເນີນການຫັນປ່ຽນຈາກການຜລິດ ດ້ວຍການຖາງປ່າເຮັດໄຮ່ໄປສູ່ຮູບແບບ ການຜລິດພືດເສດຖະກິດໄດ້ຖືກກຳນົດເອົາແບບເປັນຫລັກການລວມເພື່ອນຳໄປຈັດຕັ້ງປະຕິບັດໃນບັນດາໂຄງການພັດທະນາຕ່າງໆ ຂອງລັດຖະ ບານ (ກະຊວງກະສິກຳ ແລະ ປ່າໄມ້ 1999; ກະຊວງກະສິກຳ ແລະ ປ່າໄມ້ 2002; ສປປ ລາວ 2003) ຂອງອົງການຈັດຕັ້ງສາກົນ (ADB 1999; UNDP 2002; ADB 2003). ແຕ່ເຖິງຢ່າງໃດກໍ່ຕາມ ໃນທັງໝົດໂຄງການເລົ່ານັ້ນ, ມີຫລາຍໂຄງການໄດ້ຮັບຄວາມຫລົ້ມເຫລວ (DUCOURTIEUX 2000) ແລະ ຜົນທີ່ອອກມາຈາກການປະຕິບັດຂອງໂຄງການເລົ່ານັ້ນມີໜ້ອຍໜັກທີ່ຈະໄດ້ຮັບຜົນສຳເລັດ. ດັ່ງນັ້ນ, ໃນທີ່ນີ້ຈຶ່ງຢາກສະເໜີໃຫ້ທວນຄືນວ່າ ວິທີການໃນການຈັດຕັ້ງປະຕິບັດນັ້ນມີປະສິດຕິພາບດີແລ້ວບໍ່ ? ເນື້ອໃນຂອງພາກສະເໜີໃນທີ່ນີ້ກໍ່ຍັງບໍ່ສາມາດຈະໃຫ້ຄຳຕອບ

ໄດ້ເທື່ອ, ແຕ່ຈະເປັນການສະເໜີ ເພື່ອນຳມາຄົ້ນຄວ້ານຳກັນ ໂດຍອີງໃສ່ບົດຮຽນຕົວຈິງທີ່ມີຢູ່ໃນແຕ່ລະທ້ອງຖິ່ນ.

ຕໍ່ໄປນີ້ ພວກເຮົາຈະສະເໜີບົດຮຽນທີ່ມີໃນພື້ນທີ່ນ້ອຍອັນໜຶ່ງ ທີ່ມີການຜລິດກະສິກຳຢູ່ແລ້ວນັ້ນເຊັ່ນວ່າ ໂຄງການພັດທະນາ ຊົນນະບົດ ຄພມຜ[4] ໄດ້ປະຕິບັດຄືແນວໃດ ໃນການໃຫ້ຄວາມສຳຄັນແກ່ສະພາບຄວາມເປັນຈິງຂອງທ້ອງຖິ່ນ ກ່ອນໂຄງການຈະລົງມືທຳການປຸກລະດົມໃຫ້ປະຊາຊົນຫັນມາທຳການຜລິດພືດເສດຖະກິດອັນໃໝ່ອັນໜຶ່ງເຊັ່ນ : ໝາກແໜ່ງພັນ ເພື່ອສົ່ງອອກໄປຂາຍໃຫ້ແກ່ຕະຫລາດ ຢາພື້ນເມືອງຂອງຈີນ. ໃນເບື້ອງຕົ້ນໜ່ວຍງານຂອງໂຄງການກໍ່ໄດ້ໃຫ້ຄວາມສົນໃຈທາງດ້ານເຕັກນິກໃນການປູກພືດດັ່ງກ່າວ ຊຶ່ງເຕັກນິກໃນການປູກໝາກແໜ່ງນີ້ ນອກຈາກຄົນຈີນແລ້ວ ກໍ່ບໍ່ມີໃຜຈະເປັນຜູ້ທີ່ຮູ້ດີກວ່າ. ບັນຫາທາງດ້ານເຕັກນິກໃນການປູກຝັງກໍ່ຖືໄດ້ວ່າເປັນບັນຫາທີ່ຈະຕ້ອງໄດ້ໃຫ້ຄວາມເຂົ້າໃຈກວ່າບັນຫາອື່ນ, ເຮົາອາດເວົ້າໄດ້ວ່າມັນເປັນບັນຫາ ອັນດຽວ ທີ່ນັກວິຊາການກະສິກຳຈະຕ້ອງໄດ້ເອົາໃຈໃສ່. ແຕ່ຖ້າຈະໃຫ້ຮູ້ແຕ່ບັນຫາທາງດ້ານເຕັກນິກໃນການປູກຝັງນີ້ພຽງບັນຫາດຽວ ກໍ່ຍັງບໍ່ພຽງພໍເທື່ອເພື່ອຈະໃຫ້ສາມາດຮັບປະກັນໄດ້ຜົນສຳເລັດໃນການດຳເນີນງານ. ສຳລັບ ຄພມຜ ແລ້ວແມ່ນໄດ້ສຸມກຳລັງສ່ວນໃຫຍ່ຂອງຕົນໄປທຳການສຶກສາສະພາບທາງດ້ານເສດຖະກິດເຊັ່ນ : ຜລິດຕະພາບຂອງງານ ແລະ ການກຳຈັດຄວາມສ່ຽງຜົນເສຍທາງດ້ານເສດຖະກິດ, ໂດຍທຳການສຶກສາສະພາບທາງດ້ານການຊື້ຂາຍຂອງຜົນຜລິດນັ້ນເຊັ່ນ : ເງື່ອນໄຂໃນການເຂົ້າເຖິງການຕະຫລາດ ແລະ ການຈຳກັດຄວາມສ່ຽງຜົນເສຍ ໂດຍການເກັບກຳເອົາພາກສ່ວນຕ່າງໆທີ່ພົວພັນໃນການຊື້ການຂາຍ ແລະ ອື່ນໆ. ຈາກບົດຮຽນໃນການດຳເນີນງານກ່ຽວກັບໝາກແໜ່ງທີ່ໄດ້ປະຕິບັດມາແລ້ວຢູ່ຜົ້ງສາລີ ເຮັດໃຫ້ເຮົາເຂົ້າໃຈລະອຽດໄດ້ດີ ບັນດາເງື່ອນໄຂ ແລະ ໜ້າວຽກຕ່າງໆທີ່ຈະຕ້ອງໄດ້ປະຕິບັດ ເພື່ອໃຫ້ການປຸກລະດົມປະຊາຊົນໃຫ້ມາທຳການຜລິດພືດເສດຖະກິດໃດໜຶ່ງໄດ້ຮັບຜົນສຳເລັດໂດຍດີ.

# ການຜລິດກະສິກຳຂອງເມືອງຜົ້ງສາລີ

## ສະພາບເສດຖະກິດທີ່ອີງໃສ່ການຜລິດກະສິກຳດ້ວຍວິທີການຖາງປ່າເຮັດໄຮ່ເປັນຕົ້ນຕໍ

ເມືອງຜົ້ງສາລີເປັນເມືອງໜຶ່ງຂອງແຂວງຜົ້ງສາລີທີ່ມີລັກສະນະພິເສດ ແລະ ມີຄວາມຫຍຸ້ງຍາກທາງດ້ານຄົມມະນາຄົມ. ແຂວງຜົ້ງສາລີ ເປັນແຂວງທີ່ຢູ່ເໜືອສຸດຂອງ ສປປ ລາວ, ທິດຕາເວັນຕົກຕິດກັບ ສປ ຈີນ ແລະ ທິດຕາເວັນອອກຕິດກັບ ສສ ຫວຽດນາມ.

---

*4 ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ.*




<u>*ຮູບ 1 : ແຜນທີ່ແຂວງຜົ້ງສາລີ*</u>

ເນື້ອທີ່ສ່ວນໃຫຍ່ຂອງເມືອງຜົ້ງສາລີ ເປັນເນື້ອທີ່ໆເປັນພູຜາສູງຊັນ ແລະ ມີປ່າຕຶບດົງໜາ. ເປັນເຂດທີ່ອຸດົມສົມບູນໄປດ້ວຍລະບົບນິເວດວິທະຍາ ທີ່ຂ້ອນຂ້າງຈະຍັງຫລົງເຫລືອຢູ່ນ້ອຍ (CHAZEE 1990; DE KONINCK 1997). ບັນດາກິດຈະກຳຂອງມະນຸດ ພິເສດກໍ່ແມ່ນບັນດາກິດຈະກຳໃນການຜລິດກະສິກຳ ດ້ວຍວິການຖາງປ່າເຮັດໄຮ່ທີ່ໄດ້ສືບຕໍ່ປະຕິບັດກັນມາໄດ້ຫລາຍເຊັ່ນຄົນແລ້ວນັ້ນ ມັນໄດ້ເຮັດໃຫ້ສະພາບພືດພັນດັ້ງເດີມຂອງຂົງເຂດນີ້ມີການປ່ຽນແປງໄປ. ດັ່ງນັ້ນ, ເຮົາຈະສັງເກດເຫັນວ່າໃນປະຈຸບັນ ພືດພັນນາໆຊະນິດທີ່ມີໃນເຂດນີ້ ຈຶ່ງປະກອບມີຫລາກຫລາຍປະເພດແຕກຕ່າງກັນອອກໄປ ນັບຕັ້ງແຕ່ ປ່າໄມ້ດັ້ງເດີມໄປຈົນເຖິງປ່າເລົ່າຫຍ້າຄາ ຊຶ່ງປ່າຫຍ້າຄາດັ່ງກ່າວ ແມ່ນໄດ້ຖືກຖະນຸບຳລຸງຈາກຊາວບ້ານດ້ວຍການເອົາໄຟຈູດໃນແຕ່ລະປີ (ALEXANDRE and EBERHARDT 1998; LAFFORT and JOUANNEAU 1998; BAUDRAN 2000).

ປະຊາກອນຂອງເມືອງຜົ້ງສາລີ ສ່ວນໃຫຍ່ເປັນຊົນຊາດຊົນເຜົ່າສ່ວນນ້ອຍ ຊຶ່ງສັບວິທະຍາສາດເອີ້ນວ່າ ຊີໂນ ຕີເບແຕນ (*SinoTibetan*), ສຳລັບຊົນເຜົ່າລາວລຸ່ມແລ້ວ ຢູ່ບັນດາບ້ານຕາມຊົນນະບົດແມ່ນບໍ່ມີ :

| ຕົ້ນຕະກູນພາສາສາດ | % | ຕົ້ນຕະກູນພາສາສາດ | % |
|---|---|---|---|
| ພູນ້ອຍ | 58 % | ລາວແສງ | 10 % |
| ລາວກໍ | 13 % | ລື້ | 3 % |
| ຫໍ້ | 13 % | ມົ້ງ | 3 % |

*ແຫຼ່ງຂໍ້ມູນ : ເມືອງຜົ້ງສາລີ (1980-1995) ແລະ ຄພມຜ 1 (2000)*

<u>*ຕາຕະລາງ 1 : ສັດສ່ວນຊົນຊາດຊົນເຜົ່າທີ່ມີຢູ່ໃນເມືອງຜົ້ງສາລີ (ຢູ່ຕາມໝູ່ບ້ານຊົນນະບົດ)*</u>

ປະຈຸບັນ ເມືອງຜົ້ງສາລີມີປະຊາກອນຢູ່ 20 000 ຄົນ ທີ່ອາໃສຢູ່ໃນ 82 ບ້ານ ຊຶ່ງເປັນບ້ານທີ່ຢູ່ຊົນນະບົດ[5], ໃນນັ້ນມີ 80 % ຂອງຈຳນວນບ້ານດັ່ງກ່າວບໍ່ມີເສັ້ນທາງລົດໄປຮອດໄປເຖິງ ແລະ ມີບາງບ້ານຕ້ອງໄດ້ໃຊ້ເວລາຍ່າງເຖິງ 3 ມື້ຈຶ່ງຈະໄປຮອດ.




*ຮູບ 2 : ແຜນທີ່ເມືອງຜົ້ງສາລີ*

ປະຊາຊົນໃນເຂດນີ້ດຳລົງຊີວິດດ້ວຍການຜລິດກະສິກຳຖາງປ່າເຮັດໄຮ່, ປະສົມປະສານກັບການລ່າເນື້ອ, ການຫາປາ ແລະ ການເກັບເຄື່ອງປ່າຂອງດົງ ຊຶ່ງທັງໝົດກິດຈະກຳເລົ່ານີ້ສາມາດສ້າງລາຍຮັບໄດ້ຫລາຍກວ່າ 80 % ຂອງລາຍຮັບທັງໝົດ (DUCOURTIEUX 2004). ສະພາບການຫັນປ່ຽນຈາກການເຮັດໄຮ່ໄປສູ່ຮູບການຜລິດກະສິກຳແບບອື່ນ ແມ່ນຍັງມີບໍ່ຫລາຍ ທັງນີ້ກໍ່ຍ້ອນວ່າໃນເຂດດັ່ງກ່າວເປັນເຂດທີ່ບໍ່ມີທົ່ງພຽງ ພໍທີ່ຈະສາມາດຈັດສັນໃຫ້ເປັນເນື້ອທີ່ນາໄດ້ໃນຮ່ອມພູ ຊຶ່ງບ່ອນໃດກໍ່ເປັນຮ່ອມແຄບເໝືອນຮູບຕົວ V, ອັນໜຶ່ງອີກກໍ່ຍ້ອນເຂດດັ່ງກ່າວຍັງມີຄວາມຫຍຸ້ງຍາກ ໃນການເຂົ້າເຖິງວຽກງານການຕະຫລາດ ຂອງພືດເສດຖະກິດ ແລະ ກໍ່ຍັງມີປະກົດການ ພະຍຸພະຍາດສັດມັກເກີດຂຶ້ນຢູ່ເລື້ອຍໆ.

ໃນບ້ານໜຶ່ງໆ ການຜລິດກະສິກຳຈະທຳການຜລິດຢູ່ໃນສາມເຂດທີ່ແຕກຕ່າງກັນຈະແຈ້ງດັ່ງນີ້ : *ສວນຄົວ* ຈະມີຢູ່ໃນບໍລິເວນບ້ານ ຫລື ເຂດອ້ອມແອ້ມທີ່ຕິດກັບບ້ານ, *ປ່າເພື່ອທຳການຜລິດກະສິກຳຮອບນອກ* ຈະມີຢູ່ໃນບໍລິເວນອ້ອມແອ້ມບ້ານ ແລະ ຈະຢູ່ໃນລະດັບສູງກວ່າບ້ານເລັກນ້ອຍ, *ເຂດເຮັດໄຮ່* ພາກສ່ວນນີ້ປະກອບເປັນເນື້ອທີ່ສ່ວນໃຫຍ່ຂອງເນື້ອທີ່ດິນ ແລະ ປ່າຂອງບ້ານ ມັນຈະປະກອບໄປດ້ວຍເນື້ອທີ່ໄຮ່ທີ່ກຳລັງທຳການຜລິດໃນປີນັ້ນ ແລະ ເນື້ອທີ່ປ່າເລົ່າ (ໄຮ່ເຮື້ອ) ທີ່ຮັກສາໄວ້ໃນຮອບວຽນຕໍ່ໄປ (LAFFORT 1997; ALEXANDRE and EBERHARDT 1998; BAUDRAN 2000). ຢູ່ຜົ້ງສາລີ ໃນແຕ່ລະປີເນື້ອທີ່ໆຖືກນຳມາໃຊ້ໃນການຜລິດແມ່ນ 3 500 ຮຕ, ໃນນີ້ ກໍ່ໝາຍວ່າ ໃນແຕ່ລະປີປະຊາຊົນຕ້ອງໄດ້ທຳການຖາກຖາງປ່າປະມານ

---

**5** *ນອກຈາກນີ້ແລ້ວກໍ່ຍັງມີປະຊາກອນໃນແປດບ້ານຂອງເທດສະບານເມືອງຜົ້ງສາລີ ທີ່ມີປະຊາກອນຢູ່ 5 900 ຄົນ.*

2 000 ຮຕ. ຫລັງຈາກທຳການຜລິດໃນບ່ອນເດີມໄດ້ສອງປີແລ້ວ ເນື້ອທີ່ດັ່ງກ່າວກໍ່ຈະຖືກປະໃຫ້ເປັນເຮື້ອ. ຈາກການສະສົມພະລັງງານຈາກແສງແດດ ໂດຍຜ່ານຂະບວນການສັງເຄາະແສງ ກໍ່ເຮັດໃຫ້ເກີດມີພືດພັນຮອບສອງຂຶ້ນມາອີກໃໝ່ (ພຸ່ມໄມ້, ປ່າໄມ້ໃຫຍ່, *ອື່ນໆ*), ຊຶ່ງໄລຍະປະເປັນເຮື້ອນີ້ ໂດຍສະເລ່ຍຈະຢູ່ໃນລະດັບແຕ່ 6 ຫາ 18 ປີ. ໄລຍະປະເປັນເຮື້ອທີ່ຖືວ່າມີຫລາຍພໍສົມຄວນຄືດັ່ງກ່າວ ກໍ່ສາມາດປະກອບສ້າງ ເປັນປ່າຮອບສອງໄດ້ ຊຶ່ງເນື້ອທີ່ປ່າດັ່ງກ່າວຈະອຸດົມສົມບູນໄປດ້ວຍ ຝຸ່ນຈາກຊາກສັດ ແລະ ເສດພືດພໍທີ່ຈະສາມາດຮອງຮັບໄດ້ຮອບວຽນຕໍ່ໄປໃນການຖາງປ່າເຮັດໄຮ່ອີກ (RODER 2001). ສະພາບການຂາດແຮງງານທີ່ມີໃນເຂດນີ້ ຊຶ່ງເປັນເຂດທີ່ມີປະຊາກອນອາໄສຢູ່ບໍ່ແໜ້ນໜາ (8 ຄົນ/ກມ²) ແມ່ນຂອດອຸປະສັກຕົ້ນຕໍໃນການຜລິດກະສິກຳ ກໍ່ຄືເປັນອຸປະສັກຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງເມືອງຜົ້ງສາລີ. ໃນລະບົບການຜລິດດ້ວຍວິທີການຖາງປ່າເຮັດໄຮ່ຂອງເມືອງຜົ້ງສາລີນີ້, ໃນແຕ່ລະຄອບຄົວເຂົາເຈົ້າຈະນຳໃຊ້ແຮງງານທີ່ມີທັງໝົດໃນຄອບຄົວ 100 % ໄປໃສ່ການຜລິດກະສິກຳ, ການລ່າເນື້ອ-ຫາປາ ແລະ ການເກັບເຄື່ອງປ່າຂອງດົງ (DUCOURTIEUX 2004). ໃນແຕ່ລະຄອບຄົວ ແຕ່ລະປີຈະສາມາດຖາງປ່າໄດ້ບໍ່ເກີນ 0,8 ຮຕ/ແຮງງານ (LAFFORT and JOUANNEAU 1998; KEONUCHAN 2000). ດັ່ງນັ້ນ, ການຜລິດອື່ນໆທີ່ນຳເຂົ້າມາໃໝ່ຈຶ່ງບໍ່ຄ່ອຍຈະມີຄວາມຍືນຍົງ.

ໂດຍອີງໃສ່ປັດໃຈການຜລິດທີ່ຕົນເອງມີຢູ່ ເຊັ່ນວ່າ : ແຮງງານ, ຕົ້ນທຶນ ແລະ ອຸປະກອນເຄື່ອງມືທີ່ນຳໃຊ້ໃນການຜລິດ ແລະ ອີງໃສ່ເງື່ອນໄຂທາງດ້ານເສດຖະກິດ-ສັງຄົມຂອງເມືອງຜົ້ງສາລີ ປະຊາຊົນເຂົາເຈົ້າຈະພະຍາຍາມຈົນສຸດຄວາມສາມາດ ເຮັດແນວໃດໃຫ້ແຮງງານທີ່ມີນັ້ນໃຫ້ເກີດມີປະສິດຕິພາບໃນການຜລິດໃຫ້ໄດ້ໃນລະດັບສູງສຸດ[6] ແລະ ກໍ່ເອົາໃຈໃສ່ເປັນພິເສດໃນການຫລີກເວັ້ນບໍ່ໃຫ້ເກີດມີຄວາມສ່ຽງຜົນເສຍ ເປັນຕົ້ນກໍ່ແມ່ນຄວາມສ່ຽງຜົນເສຽທາງດ້ານເຕັກນິກ, ທາງດ້ານສະພາບຂອງດິນຟ້າອາກາດ ແລະ ຄວາມສ່ຽງຜົນເສຍທີ່ມີໃນການຊື້ຂາຍຜົນຜລິດ ທັງນີ້ກໍ່ເພື່ອໃຫ້ມີລາຍຮັບຢ່າງໜ້ອຍກໍ່ເພື່ອໃຫ້ຄອບຄົວສາມາດຢູ່ລອດໄດ້.

ບັນດາກິດຈະກຳທີ່ເຂົ້າໄປຊອກຫາໃນປ່າ (ການລ່າເນື້ອ, ການຫາປາ, ເກັບເຄື່ອງປ່າຂອງດົງ) ກໍ່ເປັນສ່ວນປະກອບໜຶ່ງທີ່ສຳຄັນໃນການສ້າງເສດຖະກິດໃຫ້ແກ່ລະດັບຄອບຄົວຂອງທ້ອງຖິ່ນນີ້ເຊັ່ນ : ຢູ່ບ້ານຊຳລັງ ກິດຈະກຳດັ່ງກ່າວ ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ເຖິງ 42 % ຂອງລາຍຮັບລວມ[7], ຫລາຍກວ່າລາຍຮັບທີ່ໄດ້ມາຈາກວຽກງານການປູກຝັງ (36 % ຂອງລາຍຮັບລວມ) ຫລື ຫລາຍກວ່າວຽກງານການລ້ຽງສັດ (19 %). ສ່ວນການເກັບເຄື່ອງປ່າຂອງດົງ, ຕົ້ນຕໍກໍ່ມີ ຈຳພວກໜໍ່ໄມ້, ເຄືອຕົບຕີ່ ແລະ ໝາກແໜ່ງປ່າ.

---

*6* *ພູມປັນຍາຊາວບ້ານທີ່ສາມາດເຮັດໃຫ້ໄດ້ລາຍຮັບສູງສຸດຕໍ່ແຮງງານ (ກີບ/ວັນງານ), ແລະ ຈະບໍ່ແມ່ນ (ກລ/ຮຕ ຫລື ກີບ/ຮຕ).*

*7* *ການລ່າເນື້ອມີ 22 % ຂອງລາຍຮັບລວມປະຈຳປີໃນລະດັບຄອບຄົວ (ເຮັດແຮ້ວ ແລະ ເຮັດກະຕໍ່), ການເກັບເຄື່ອງປ່າຂອງດົງມີ 11 % ແລະ ການຫາປາ 8 % (ໃສ່ແຫໃສ່ມອງ ແລະ ການເຮັດຕ້ອນເຮັດລີ່).*




*ຮູບ 3 : ການແຍກປະເພດລາຍຮັບລວມໃນລະດັບຄອບຄົວຂອງບ້ານຊຳລັງ*[8]

ດັ່ງນັ້ນ, ເຮົາຈຶ່ງເວົ້າໄດ້ວ່າວຽກງານການເຂົ້າໄປຊອກຫາໃນປ່າ (ການລ່າເນື້ອ, ການຫາປາ, ການເກັບເຄື່ອງປ່າຂອງດົງ) ແມ່ນເປັນກິດຈະກຳທີ່ສຳຄັນບໍ່ໜ້ອຍຕໍ່ເສດຖະກິດຂອງຄອບຄົວ, ເຖິງແມ່ນວ່າໃນຕອນລົງໄປຕັ້ງຄຳຖາມເຈາະຈີ້ມ ເພື່ອເກັບກຳຂໍ້ມູນຢູ່ນັ້ນ ເຮົາກໍ່ຍັງເບິ່ງແບບຜິວເຜີນຢູ່ວ່າ ມັນບໍ່ມີຫຍັງຫລວງຫລາຍ. ແຕ່ໃດໆມາແລ້ວ, ການເຂົ້າໄປຊອກຫາໃນປ່າ ແມ່ນກິດຈະກຳໜຶ່ງທີ່ເຮັດໃຫ້ຄອບຄົວທີ່ມີຖານະທຸກຍາກ, ທີ່ບໍ່ມີເງື່ອນໄຂໄປຊອກຫາໃນວິທີທາງອື່ນໃຫ້ສາມາດຢູ່ລອດໄດ້ (UNDP 2002) ; ທັດສະນະດັ່ງກ່າວ ແມ່ນຈະເຫັນໄດ້ຈະແຈ້ງຢູ່ຜົ້ງສາລີ. ລາຍຮັບທີ່ໄດ້ມາຈາກການເຂົ້າໄປຊອກຫາເຄື່ອງປ່າຂອງດົງ ແມ່ນຈຸນເຈືອກັນດີກັບລາຍຮັບລວມຂອງຄອບຄົວ, ຊຶ່ງມັນສະແດງໃຫ້ເຮົາເຫັນວ່າ ບັນດາຄອບຄົວທີ່ມີຖານະດີ ກໍ່ແມ່ນຄອບຄົວທີ່ມີລາຍໄດ້ໃນລະດັບສູງສຸດຈາກການໄປຊອກເຄື່ອງປ່າຂອງດົງ, ຈາກການລ່າເນື້ອ ແລະການຫາປາ ນັ້ນເອງ[9].




*ຮູບ 4 : ລາຍຮັບຈາກການຊອກເຄື່ອງປ່າຂອງດົງ ແລະ ລາຍຮັບລວມ*

---

**8** *ລາຍຮັບລວມສະເລ່ຍປະຈຳປີຂອງຄອບຄົວໜຶ່ງ : 15,6 ລ້ານ ກີບ (1 500 ໂດລາ, ລວມເອົາທັງມູນຄ່າທີ່ນຳໃຊ້ພາຍໃນຄົວເຮືອນອີກນຳ), ໃນນີ້ມີ 2,1 ລ້ານ ກີບ (200 ໂດລາ) ເປັນລາຍຮັບທາງດ້ານເງິນສົດ. ໝາຍເຫດ :ອັດຕາແລກປ່ຽນແມ່ນ 10 460 ກີບ / 1 ໂດລາ 11/2003.*

**9** *ຂອດອຸປະສັກຕົ້ນຕໍທາງດ້ານເສດຖະກິດຂອງຄອບຄົວກໍ່ແມ່ນ ການຂາດເຂີນແຮງງານ, ລາຍຮັບຂອງຄອບຄົວຈະມີໜ້ອຍຫລືຫລາຍແມ່ນຂຶ້ນຢູ່ກັບຈຳນວນແຮງງານທີ່ມີຢູ່ໃນຄອບຄົວນັ້ນ ຊຶ່ງແຮງງານທີ່ມີເປັນຈຳນວນຫລາຍນັ້ນກໍ່ສາມາດມີເວລາໄປອກຫາເຄື່ງປ່າຂອງດົງໄດ້.*

## ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ

ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ (ຄພມຜ) ເປັນໂຄງການຮ່ວມມືລະຫວ່າງລັດຖະບານ ສປປ ລາວ ແລະ ຝລັ່ງ ເພື່ອປະຕິບັດຍຸດທະສາດໃນການຕ້ານກັບຄວາມທຸກຈົນ ແລະ ປົກປັກຮັກສາສະພາບແວດລ້ອມ. ຈຸດປະສົງອັນທີໜຶ່ງຂອງໂຄງການ ກໍ່ແມ່ນການພັດທະນາ ທາງດ້ານເສດຖະກິດແບບປະສົມປະສານ ໃຫ້ທົ່ວເຖິງແກ່ປະຊາຊົນເມືອງຜົ້ງສາລີ. ຈຸດປະສົງໃນການພັດທະນາເສດຖະກິດນີ້ ຕ້ອງໄດ້ປະຕິບັດໄປກ່ອນ ເພື່ອໃຫ້ສາມາດບັນລຸໄດ້ຈຸດປະສົງອັນທີສອງ ນັ້ນກໍ່ຄື ການຈຳກັດເນື້ອທີ່ການຖາງປ່າເຮັດໄຮ່ນັ້ນລົງເທື່ອລະກ້າວໃນຕໍ່ໜ້າ.

ເພື່ອໃຫ້ສາມາດບັນລຸໄດ້ຈຸດປະສົງທັງສອງອັນຄືດັ່ງກ່າວ, ຄພມຜ ໄດ້ກຳນົດໜ້າວຽກຂອງຕົນແນໃສ່ການສົ່ງເສີມການຜລິດໃຫ້ເປັນສິນຄ້າ ທັງນີ້ກໍ່ເພື່ອ :

- ຍົກສູງລາຍໄດ້ທາງດ້ານເງິນສົດໃຫ້ແກ່ປະຊາຊົນ (*ຈຸດປະສົງອັນທີ 1*).
- ກ້າວໄປເທື່ອລະກ້າວໃນການຫັນປ່ຽນຈາກການຜລິດເຂົ້າໂດຍກົງ ໂດຍເຮັດໃຫ້ປະຊາ ຊົນມີເງື່ອນໄຂສາມາດຊື້ເຂົ້າກິນໄດ້*(ຈຸດປະສົງອັນທີ 2*, ເປັນການຫລຸດຜ່ອນເນື້ອທີ່ໃນການຖາງປ່າເຮັດໄຮຂອງແຕ່ລະຄອບຄົວນັ້ນລົງ).

ຍ້ອນບໍ່ມີເງື່ອນໄຂໃນການທີ່ຈະພໍທຳການຜລິດໄດ້ເໝືອນຢູ່ເຂດທົ່ງພຽງ, ບໍ່ມີທົ່ງພຽງຢູ່ຜົ້ງສາລີ, ການທີ່ຈະສາມາດເຮັດໃຫ້ເນື້ອທີ່ໄຮ່ໃຫ້ຍັງຄົງເທົ່າເດີມ ແລະ ບໍ່ໃຫ້ມີການເພີ້ມຂຶ້ນນັ້ນ ມັນຈະຕ້ອງໄດ້ມີການສົ່ງເສີມການຜລິດໃຫ້ເປັນສິນຄ້າໃຫ້ຫລາຍຂຶ້ນ ທັງນີ້ກໍ່ເພື່ອໃຫ້ສາມາດຍົກສູງລາຍຮັບຂອງປະຊາຊົນ. ຈາກຂໍ້ສົມມຸດຖານໃນເບື້ອງຕົ້ນຂອງໂຄງການ ໄດ້ກຳນົດເອົາໄວ້ວ່າ ການເພີ້ມຂຶ້ນຂອງຄວາມຮຽກຕ້ອງການ ທາງດ້ານສະບຽງອາຫານທີ່ມີສາຍເຫດມາຈາກການເພີ້ມຂຶ້ນຂອງພົນລະເມືອງນັ້ນ ຈະສາມາດແກ້ໄຂໄດ້ດ້ວຍການສ້າງເງື່ອນໄຂໃຫ້ສາມາດຊື້ເຂົ້າກິນໄດ້. ເງິນທີ່ຈະນຳມາຊື້ເຂົ້າກິນຄືດັ່ງກ່າວ ແມ່ນຈະໄດ້ມາຈາກການຂາຍຜົນຜລິດກະສິກຳ, ຂາຍຜົນຜລິດຈາກການປູກຝັງ ຫລື ຜົນຜລິດທີ່ໄດ້ມາຈາກການລ້ຽງສັດ.

ໂຄງການໄດ້ເລີ້ມບາດກ້າວທີສອງຂອງຕົນມາຕັ້ງແຕ່ປີ 2002 ເປັນຕົ້ນມາ, ດ້ວຍງົບປະມານ 5,2 ລ້ານ ຢູໂຣ[10], ໃນນັ້ນທຶນຊ່ວຍເຫລືອລ້າຂອງອົງການຝລັ່ງເສດເພື່ອການພັດທະນາ (ອາແອັຟເດ) ມີ 73 % ແລະ ການປະກອບສ່ວນຂອງຊາວບ້ານມີ 22 %. ໂຄງການຈະສິ້ນສຸດລົງໃນປີ 2006 ຫລັງຈາກທີ່ໄດ້ປະຕິບັດໜ້າວຽກດັ່ງຕໍ່ລົງໄປນີ້ໄດ້ສຳເລັດລົງແລ້ວເຊັ່ນ : ວຽກງານການລ້ຽງສັດ, ວຽກງານປູກຝັງ ແລະ ການຄ້າ, ວຽກງານການເງິນຈຸລະພາກ, ວຽກງານການສ້າງທາງບ້ານຕໍ່ບ້ານ, ວຽກງານນ້ຳລິນ ແລະ ວຽກງານການສຶກສາຂັ້ນພື້ນຖານບ້ານປະຊາຊົນ.

ເລີ້ມຕົ້ນທຳອິດໃນປີ 1994 ຄພມຜ ໄດ້ທຳການສຶກສາ ແລະ ເກັບກຳຂໍ້ມູນລະອຽດກ່ຽວກັບລະບົບການຜລິດກະສິກຳ ທີ່ມີຢູ່ພາຍໃນເມືອງຜົ້ງສາລີ (ALEXANDRE and EBERHARDT 1998; LAFFORT and JOUANNEAU 1998; BAUDRAN 2000), ທັງນີ້ ກໍ່ເພື່ອໃຫ້ເຂົ້າໃຈໄດ້ເຖິງຄວາມກົມກຽວກັນ

---

[10] *5,7 ລ້ານ ໂດລາ ບວກກັບບາດກ້າວທີໜຶ່ງ (1996-2002), ງົບປະມານທັງໝົດທັງສອງບາດກ້າວຈະຕົກເປັນ 12 ລ້ານ ໂດລາ.*

ດີຂອງລະບົບການຜລິດກະສິກຳທີ່ມີໃນທ້ອງຖິ່ນນີ້ ທີ່ໄດ້ທຳການໝູນໃຊ້ມາຈາກປະຊາຊົນ ແລະ ອັນໜຶ່ງກໍ່ເພື່ອກຳນົດເອົາບັນດາໜ້າວຽກທີ່ເຫັນວ່າມີຄວາມເໝາະ ສົມທີ່ສຸດໃນການທີ່ຈະເຂົ້າໄປຊ່ວຍເຫລືອປະຊາຊົນ.

ແນວຄວາມຄິດທີ່ຈະມີການປຸກລະດົມໃຫ້ປະຊາຊົນທຳການປູກໝາກແໜ່ງ ກໍ່ເກີດຂຶ້ນໃນຕອນທຳການສຶກສາ ແລະ ເກັບກຳຂໍ້ມູນໃນຕອນນັ້ນ ຊຶ່ງເຫັນໄດ້ວ່າໝາກແໜ່ງເປັນອົງປະກອບໜຶ່ງທີ່ສຳຄັນໃຫ້ແກ່ເສດຖະກິດຂອງປະຊາຊົນ. ແຕ່ໃດໆມາໝາກແໜ່ງກໍ່ແມ່ນຜົນຜລິດອັນດັບໜຶ່ງທີ່ມີການສົ່ງອອກຢ່າງເປັນທາງການຂອງແຂວງຜົ້ງສາລີ. ແຕ່ໃນນີ້ພວກເຮົາກໍ່ຍັງໄດ້ສັງເກດເຫັນວ່າ ການເກັບໝາກແໜ່ງປ່າມີອຸປະສັກຕົ້ນຕໍຢູ່ສອງອັນທີ່ເຮັດໃຫ້ປະຊາຊົນໄດ້ຮັບລາຄາບໍ່ຄ່ອຍດີເທົ່າທີ່ຄວນ :

- ຍ້ອນເງື່ອນໄຂທາງດ້ານສັງຄົມໃນການເກັບໝາກແໜ່ງ, ເກັບຢ່າງເສລີ ຈຶ່ງເຮັດໃຫ້ເກີດມີສະພາບການເກັບກ່ອນລະດູການອັນຄວນ, ເຮັດໃຫ້ເກັບບໍ່ໄດ້ ໜ່ວຍໝາກແໜ່ງທີ່ສຸກດີ, ດັ່ງນັ້ນ ຄຸນນະພາບຂອງໝາກແໜ່ງຈຶ່ງຕ່ຳ (AUBERTIN 2003) ;
- ໝາກແໜ່ງປ່າມີປະລິມານນ້ຳມັນທີ່ໃຊ້ເປັນຢາບໍ່ຫລາຍເທົ່າກັນກັບໝາກແໜ່ງພັນ ທີ່ປູກເອົາ, ຢູ່ຈີນສ່ວນໃຫຍ່ເຂົາເຈົ້າຈະຕ້ອງການແຕ່ໝາກແໜ່ງພັນທີ່ປູກເອົານີ້ເປັນ ຜລິດຕະພັນ ເພື່ອນຳໃຊ້ເຂົ້າໃນໂຮງງານອຸດສາຫະກຳ, ເມື່ອເປັນຄືແນວນີ້ກໍ່ ໝາຍ ຄວາມວ່າ ໝາກແໜ່ງປ່າທີ່ເຮົາເກັບມາຂາຍກັນໃນທຸກວັນນີ້ ຈຶ່ງເປັນພຽງແຕ່ຜົນຜລິດ ທີ່ຕ້ອງການໃນຕອນທີ່ໝາກແໜ່ງພັນ ມີບໍ່ພຽງພໍເທົ່ານັ້ນ.

ວຽກງານການປູກໝາກແໜ່ງສາມາດເຂົ້າກັນໄດ້ດີກັບລະບົບນິເວດຂອງປ່າໄມ້ຮອບສອງ ຊຶ່ງລະບົບນິເວດດັ່ງກ່າວຢູ່ເມືອງຜົ້ງສາລີແມ່ນມີຫລາຍ. ການປູກໝາກແໜ່ງແມ່ນປູກຢູ່ກ້ອງປ່າໄມ້, ເປັນການຜລິດທີ່ຮັກສາເນື້ອດິນ ແລະ ມັນຍັງເກີດເປັນພຸ່ມໄມ້ຄຸມດິນ ຮັບປະກັນໃຫ້ມີການຮັກສາສະພາບແວດລ້ອມປ່າໄມ້ (ຮັກສາຄວາມຫລາກຫລາຍຂອງລະບົບນິເວດ ; ຮັກສາໂຄງ ສ້າງ ແລະ ຄວາມອຸດົມສົມບູນຂອງດິນ, ຄວາມຊຸ່ມຊື່ນ, ອະນຸພາບອາກາດ ແລະ ອື່ນໆ ...).

ຈາກຈຸດປະສົງຂອງໂຄງການ (ຍົກສູງລາຍຮັບໃຫ້ແກ່ປະຊາຊົນ ໄປພ້ອມໆກັນກັບການປ້ອງກັນສະພາບແວດລ້ອມປ່າໄມ້) ແລະ ຈາກບົດສະຫລຸບຕ່າງໆຂອງບົດສຶກສາຄວາມສາມາດເປັນໄປໄດ້ຂອງໂຄງການ, ຄພມຜ ຈຶ່ງໄດ້ມີການກຳນົດເອົາແຜນການໃນການຊຸກຍູ້ ແລະ ສົ່ງເສີມໃຫ້ແກ່ປະຊາຊົນເມືອງຜົ້ງສາລີໃຫ້ທຳການປູກໝາກແໜ່ງ.

# ການຊຸກຍູ້ ແລະ ສົ່ງເສີມໃນການປູກໝາກແໜ່ງ

## ໝາກແໜ່ງພັນ : ຜລິດຕະພັນ, ຕະຫລາດ ແລະ ເຕັກນິກໃນການປູກ

ໝາກແໜ່ງພັນ (*Amomum villosum var. xanthoides*) ເປັນພືດທີ່ຈັດຢູ່ໃນຈຳພວກພືດຢືນຕົ້ນທີ່ບໍ່ມີລຳຕົ້ນ ແລະ ຈັດຢູ່ໃນຕະກຸນ ຂ່າຂີງ[11]. ນຳໃຊ້ເຂົ້າໃນການປຸງແຕ່ງເປັນຢາປິ່ນປົວໂລກກະເພາະອາຫານພື້ນເມືອງຂອງຈີນ. ເມື່ອເປັນຄືແນວນີ້ກໍ່ໝາຍຄວາມວ່າ ໝາກແໜ່ງ ມີເງື່ອນໄຂການຕະຫລາດທີ່ມີລູກຄ້າເຖິງ 1,3 ຕື້ຄົນ, ນອກຈາກນີ້ແລ້ວກໍ່ຍັງມີຄົນຈີນທີ່ອາໃສຢູ່ໃນປະເທດອື່ນໆ ຂອງທະວີບອາຊີ ແລະ ທະວີບອື່ນໆອີກນຳ (20 ລ້ານຄົນ , DE KONINCK, ROCHE *et al.* 2000). ຄວາມຕ້ອງການຂອງໂຮງງານຜລິດຢາພື້ນເມືອງຂອງຈີນ ໃນແຕ່ລະປີຈະຕ້ອງການຢູ່ປະມານ 2 000 ໂຕນ ສ່ວນວ່າຜົນຜລິດໝາກແໜ່ງໃນແຕ່ລະປີພັດສາມາດ ສະໜອງໄດ້ພຽງແຕ່ເຄິ່ງໜຶ່ງຂອງຄວາມຕ້ອງການເທົ່ານັ້ນ, ສ່ວນທີ່ຍັງບໍ່ສາມາດຜລິດໄດ້ນັ້ນ ກໍ່ຕ້ອງໄດ້ເກັບຊື້ໝາກແໜ່ງປ່າມາເພີ້ມເຕີມໃສ່ ແລະ ໝາກແໜ່ງປ່ານີ້ລາຄາກໍ່ບໍ່ຢາກດີປານໃດ (SAINT PIERRE 1998).

ໝາກແໜ່ງ ເປັນພືດຊະນິດໜຶ່ງທີ່ເກີດຂຶ້ນໃນປ່າທຳມະຊາດເຂດຮ້ອນ ໃນພື້ນທີ່ໆມີລະດັບສູງຂອງເຂດອາຊີຕາເວັນອອກສ່ຽງໃຕ້, ເປັນພືດທີ່ມັກເກີດໃນບ່ອນທີ່ມີສະພາບທີ່ຊຸ່ມຊື່ນ ແລະ ມີຮົ່ມນຳ[12]. ເງື່ອນໄຂທີ່ເໝາະສົມທີ່ສຸດສຳລັບໝາກແໜ່ງແມ່ນໃຫ້ມີອຸນຫະພູມສະເລ່ຍແຕ່ 1922ໜC, ໃນເດືອນທີ່ໜາວທີ່ສຸດກໍ່ໃຫ້ມີອຸນຫະພູມສະເລ່ຍບໍ່ໃຫ້ຫລຸດ 12ໜC, ປະລິມານນ້ຳຝົນປະຈຳປີກໍ່ໃຫ້ມີໃນລະຫວ່າງແຕ່ 1 200 ຫາ 2 400 ມມ (ZHOU, YAO *et al.* 1999).



*ຮູບ 5 : ສວນໝາກແໜ່ງ*

ຕົ້ນໝາກແໜ່ງຈະມີຄວາມສູງແຕ່ 1 ຫາ 2 ແມັດ, ມັນສາມາດຂະຫຍາຍຕົວໄດ້ໄວດ້ວຍໜໍ່, ຮາກຂອງມັນຈະແຜ່ຂະໜານອອກໄປຕາມໜ້າດິນ[13], ມັກດິນຟຸຜຸ່ຍ ແລະ ເປັນດິນທີ່ອຸດົມສົມ ບູນໄປດ້ວຍຝຸ່ນອິງຄະທາດ[14].

---

11 *ໝາກແໜ່ງພັນທີ່ເປັນຢານີ້ຈະບໍ່ຄືກັນກັບໝາກແໜ່ງທີ່ໃຊ້ເປັນນ້ຳຫອມ (Elettaria cardamomum), ໝາກແໜ່ງພັນທີ່ເປັນຢາ ຢູ່ອິນເດຍ ແລະ ຢູ່ຕາເວັນອອກກາງ ເຂົາເຈົ້າຈະໃຊ້ເປັນເຄື່ອງເທດໃນການປຸງແຕ່ງອາຫານ ແລະ ນອກນັ້ນກໍ່ຍັງນຳໃຊ້ເປັນເຄື່ອສຳອາງອີກນຳ.*

12 *ໝາກແໜ່ງສາມາດເກີດໄດ້ໃນຮົ່ມໃນລະດັບແຕ່ 10 ຫາ 60 % ແລະ ຈະເໝາະສົມທີ່ສຸດແມ່ນຢູ່ໃນລະດັບແຕ່ 30 % ຫາ 40 %.*

13 *80 % ຂອງຈຳນວນຮາກຈະຂະຫຍາຍຕົວຢູ່ຊັ້ນໜ້າດິນນອກສຸດໃນຄວາມເລິກສິບຊັງຕີແມັດ; ຮາກຂອງມັນຈະບໍ່ເຈາະລົງເລິກເກີນກວ່າ 20 ຊມ.*

ຕົ້ນໝາກແໜ່ງຈະບໍ່ມີຄວາມທົນທານຕໍ່ຄວາມໜາວ, ດອກຂອງມັນຈະອອກມາໃນຊ່ວງແຕ່ເດືອນເມສາ-ພຶດສະພາ ແລະ ມັນຈະລົ່ນ ແລະ ເສຍຫາຍຖ້າຄວາມຊຸ່ມຊື້ນຂອງດິນຫາກຕໍ່າກວ່າ 22 %. ດອກຈະປົ່ງອອກຈາກເຫງົ້າ ບ່ອນທີ່ຢູ່ຕິດກັບບ່ອນທີ່ປົ່ງຮາກ. ການປະສົມເກສອນແມ່ນອາໃສແມງໄມ້ເປັນຜູ້ປະສົມໃຫ້ (*Apiscerana indica et dorsati, Nomia strigate*, ZHOU 1993).



*<u>ຮູບທີ 6 : ດອກໝາກແໜ່ງ, ປົ່ງອອກມາຈາກເຫງົ້າບ່ອນທີ່ປົ່ງຮາກ</u>*

ໝາກແໜ່ງຈະສຸກໃນເດືອນສິງຫາ, ໃນເດືອນດຽວກັນນີ້ກໍ່ຈະເປັນເດືອນທີ່ປະຊາຊົນພາກັນ ເກັບໝາກແໜ່ງ, ຕາກໝາກແໜ່ງ ແລະ ຊື້ຂາຍໝາກແໜ່ງກັນ.



*<u>ຮູບ 7 : ໝາກແໜ່ງພັນ</u>*

ສ່ວນຫລາຍແລ້ວຢູ່ລາວແມ່ນຈະມີແຕ່ໝາກແໜ່ງປ່າ[15], ສຳລັບຢູ່ຈີນ ໃນແຂວງກວາງຕຸ້ງ ໝາກແໜ່ງພັນທີ່ເປັນຢາແມ່ນໄດ້ປູກກັນມາໄດ້ຫລາຍເຊັ່ນຄົນແລ້ວ ແລະ ໝາກແໜ່ງພັນດັ່ງກ່າວໄດ້ເລີ້ມຕົ້ນນຳເຂົ້າໄປປູກຄັ້ງທຳອິດຢູ່ເຂດສິບສອງປັນນາ (ແຂວງຢຸນນານ) ໃນຊຸມປີ 60. ຢູ່ເຂດສິບສອງປັນນານີ້ມັນກໍ່ໄດ້ກາຍມາເປັນ

---

**14** *ສ່ວນປະສົມຂອງອິງຄະທາດ > 3 %, ລະດັບ pH ຂອງດິນແຕ່ 5,5 ຫາ 7,5 (ແຕ່ກໍ່ພໍເກີດໄດ້ຢູ່ໃນລະດັບແຕ່ 5,0 ຫາ 7,5).*

**15** *ຍົກເວັ້ນເຂດພູພຽງບໍລະເວນ ຊຶ່ງຢູ່ທີ່ນີ້ປະຊາຊົນໄດ້ທຳການປູກໝາກແໜ່ງມາໄດ້ຫລາຍປີແລ້ວ (DUCOURTIEUX 1994; PELLIARD 1998; BABIN 1999; GRIMEAUD and MEAUX 1999)*

ການຜລິດທີ່ມີຄວາມສຳຄັນ[16] ຊຶ່ງໄດ້ເຮັດໃຫ້ເສດຖະກິດໃນເຂດຊາຍແດນທີ່ຕິດກັບຜົ້ງສາລີ ມີການຂະຫຍາຍຕົວດີ (ZAIFU 1998; ZHAOHUA *et al.* 1998). ເຕັກນິກໃນການປູກແມ່ນເອົາແບບມາຈາກການສັງເກດເບິ່ງການຈະເລີນເຕີບໂຕຕາມທຳມະຊາດຂອງຕົ້ນໝາກແໜ່ງຄື ປູກຢູ່ກ້ອງຮົ່ມຕົ້ນໄມ້ທຳມະຊາດຫລັງຈາກທີ່ໄດ້ມີການແຜ້ວຖາງ, ວິທີການປູກກໍ່ແມ່ນຝັງເຫງົ້າລົງດິນເລັກນ້ອຍ, ເສຍຫຍ້າສອງຄັ້ງຕໍ່ປີໃນຊ່ວງສອງປີທຳອິດ ຕໍ່ຈາກນັ້ນໄປກໍ່ທຳການແຜ້ວຖາງປີລະຄັ້ງ[17] (ZHOU 1993).

ໝາກຂອງມັນຈະອອກມາຊຸດທຳອິດຫລັງຈາກໄດ້ປູກໄປແລ້ວສາມປີ, ສ່ວນວ່າຈະສາມາດເກັບໄດ້ຫລາຍນັ້ນກໍ່ແມ່ນເລີ້ມຈາກປີທີຫ້າເປັນຕົ້ນໄປ ແລະ ພ້ອມກັນນັ້ນສະມັດຕະພາບກໍ່ຈະເພີ້ມຂຶ້ນໄປໃນແຕ່ລະປີຈົນໄປຮອດປີທີສິບ ຕໍ່ຈາກນັ້ນສະມັດຕະພາບກໍ່ຈະຄ່ອຍໆຫລຸດລົງ. ຖ້າຈະໃຫ້ດີແທ້ ໃນສິບຫ້າປີໃດຕ້ອງໄດ້ທຳການປູກຄືນໃໝ່.

ໜ້າວຽກທີ່ຈະໄດ້ເຮັດໃນສວນໝາກແໜ່ງແມ່ນມີບໍ່ຫລາຍ ມີແຕ່ການເສຍຫຍ້າໃນເບື້ອງຕົ້ນ, ຕໍ່ຈາກນັ້ນກໍ່ຈະມີການແຜ້ວຖາງແດ່ເລັກໆນ້ອຍໆ. ສຳລັບວຽກງານການເກັບໝາກແໜ່ງຈະຕ້ອງ ການແຮງງານຢູ່ 50 ວັນງານຕໍ່ໜຶ່ງເຮັກຕາ, ນອກຈາກນີ້ກໍ່ຍັງມີວຽກຕາກໝາກແໜ່ງ ຊຶ່ງຈະຕ້ອງການແຮງງານຢູ່ແຕ່ສອງຫາຫ້າມື້[18], ຂຶ້ນກັບສະພາບຕົວຈິງຂອງອາກາດ.




*ຮູບ 8 : ເສັ້ນສະແດງການປ່ຽນແປງຂອງສະມັດຕະພາບຂອງການຜລິດໝາກແໜ່ງ*

ໃນເນື້ອທີ່ໜຶ່ງເຮັກຕາໝາກແໜ່ງສາມາດໃຫ້ຜົນຜລິດໄດ້ແຕ່ 20 ຫາ 750 ກລ ໝາກແໜ່ງແຫ້ງ, ຄວາມໜ້ອຍຫລາຍຂອງສະມັດຕະພາບຄືດັ່ງກ່າວມັນຂຶ້ນຢູ່ກັບອາຍຸຂອງຕົ້ນໝາກແໜ່ງທີ່ປູກມານັ້ນ, ສ່ວນວ່າປັດໄຈອື່ນໆ (ຮົ່ມ, ຄວາມຊຸ່ມຊື່ນ, ຄວາມອຸດົມສົມບູນຂອງດິນ) ແລະ ສະພາບຂອງຝົນທີ່ມີໃນແຕ່ລະປີ ກໍ່ມີຜົນເຮັດໃຫ້ຜົນຜລິດທີ່ອອກມາມີການຫລຸດລົ່ນກັນເໝືອນກັນ, ອັນຕົ້ນຕໍກໍ່ແມ່ນຂຶ້ນກັບການມາໄວ ຫລື ມາຊ້າຂອງລະດູຝົນ ຊຶ່ງຈະມີໃນຊ່ວງ ເດືອນເມສາ-ພຶດສະພາ ມັນຈະມີຜົນກະທົບຕໍ່ການອອກດອກ ແລະ ການປະສົມ

---

*16* *8 000 ຮຕ, 80 % ຂອງຜົນຜລິດໝາກແໜ່ງທັງໝົດຂອງຈີນ ໃນປີ 1998.*

*17* *ຈາກໄລຍະຫ່າງທີ່ປູກໃນເບື້ອງຕົ້ນ ໜຶ່ງເບັ້ຍ/ມ², ຄວາມໜາແໜ້ນທີ່ເໝາະສົມທີ່ສຸດແມ່ນຈະຢູ່ໃນລະດັບ 20 ຕົ້ນ/ມ², ໃນເມື່ອມີຫລາຍກວ່ານີ້ເຮົາຄວນຫລົກອອກ ແລະ ຕົ້ນທີ່ຫລົກອອກນີ້ກໍ່ສາມາດນຳໄປປູກໃນບ່ອນໃໝ່ອີກຕໍ່ໄປໄດ້, ເຮັດໃຫ້ເຮົາສາມາດຂະຫຍາຍເນື້ອທີ່ໄດ້ໂດຍບໍ່ມີການສິ້ນເປືອງຫຍັງຫລາຍ.*

*18* *ຖ້າຫາກນຳໃຊ້ເຕົາຢ້າງໝາກແໜ່ງກໍ່ຈະເຮັດໃຫ້ຜລິດຕະພາບຂອງງານເພີ້ມຂຶ້ນ ແລະ ພ້ອມກັນນັ້ນກໍ່ຈະເປັນການເພີ້ມຄຸນນະພາບຂອງຜົນຜລິດໃຫ້ສູງຂຶ້ນຍ້ອນວ່າເປັນການຕາກແຫ້ງທີ່ໄດ້ໄວ, ແຫ້ງລະອຽດໝົດທຸກໜ່ວຍ ແລະ ສາມາດບັນຊາໄດ້ຕາມຄວາມຕ້ອງການ.*

ເກສອນຂອງດອກ. ໃນເດືອນກັນຍາ 2003 ນີ້, ລາຄາໝາກແໜ່ງພັນທີ່ແຫ້ງດີແລ້ວແມ່ນ 20 000 ກີບ/ກລ (1,90 ໂດລາ/ກລ, ລາຄາທີ່ປະຊາຊົນຂາຍອອກ) ຢູ່ທີ່ຜົ້ງສາລີ, ສຳລັບໝາກແໜ່ງປ່າແມ່ນ 5 000 ກີບ/ກລ (0,5 ໂດລາ/ກລ).

## ຄພມຜ ໄດ້ໃຫ້ຄວາມສຳຄັນໃນໜ້າວຽກທາງດ້ານການຄ້າຜົນຜລິດ ຫລາຍກວ່າໜ້າວຽກທາງດ້ານເຕັກນິກໃນການປູກຝັງ

ໃນບົດວິພາກຂອງໂຄງການ ກໍ່ໄດ້ເວົ້າເຖິງຄວາມອາດສາມາດເປັນໄປໄດ້ ໃນວຽກງານການສົ່ງເສີມການປູກໝາກແໜ່ງ. ແຕ່ກ່ອນຈະເອົາບັນຫານີ້ລົງໄປສົມທົບກັບປະຊາຊົນ ໃນໄລຍະຜ່ານມາ ໜ່ວຍງານຂອງໂຄງການກໍ່ໄດ້ເອົາໃຈໃສ່ເປັນພິເສດໃນການສຶກສາຄົ້ນຄວ້າເຖິງຄວາມເປັນໄປໄດ້ຂອງຂໍ້ສົມມຸດຖານດັ່ງກ່າວ.

ສິ່ງທີ່ຕ້ອງຢາກການຮູ້ ອັນທີໜຶ່ງກໍ່ແມ່ນຈຸດພິເສດຂອງຕະຫລາດຮັບຊື້ຜົນຜລິດໝາກແໜ່ງ.
ໃນເດືອນມັງກອນ 1998 ໜ່ວຍງານຂອງໂຄງການ ໂດຍສົມທົບກັບພະນັກງານຂອງຫ້ອງການກະສິກຳ ໄດ້ເດີນທາງໄປທັດສະນະສຶກສາຢູ່ເຂດສິບສອງປັນນາຂອງຈີນ ເພື່ອພົບປະ ແລະ ເກັບກຳເອົາຂໍ້ມູນນຳພາກສ່ວນທີ່ມີສ່ວນກ່ຽວຂ້ອງໃນວຽກງານການຄ້າ, ພ້ອມກັນນັ້ນ ກໍ່ຍັງໄດ້ປຶກສາຫາລືກັບເຂົາເຈົ້າເລົ່ານັ້ນ ເຖິງສະພາບໃນອະນາຄົດຂອງອ້ອຍ, ຊາ ແລະ ໝາກແໜ່ງ. ຜ່ານການປຶກສາຫາລື ແລະ ເກັບກຳຂໍ້ມູນໃນຄັ້ງນັ້ນເຫັນວ່າ ມີພຽງແຕ່ໝາກແໜ່ງ ອັນດຽວທີ່ຈະມີຄວາມຮັບປະກັນທາງດ້ານເສດຖະກິດທີ່ຍືນຍົງໃຫ້ແກ່ປະຊາຊົນຊາວເມືອງຜົ້ງສາລີ, ມັນ ມີຕະຫລາດຮັບຊື້ທີ່ໝັ້ນຄົງ, ແຕ່ສະພາບການໃນການປູກໝາກແໜ່ງຢູ່ຈີນເອງ ພັດຫລຸດລົງ ຍ້ອນປ່າໄມ້ເຂດຮ້ອນຂອງຈີນມີຈຳກັດ, ຢູ່ຈີນນີ້ ເຖິງແມ່ນວ່າຄ່າຂົນສົ່ງໃນການສົ່ງອອກຈະຖືກແຕ່ຄ່າແຮງງານພັດສູງ (SAINTPIERRE 1998).
ໃນການເດີນທາງໄປປະຕິບັດງານໃນຄັ້ງນັ້ນ, ໜ່ວຍງານຂອງໂຄງການຍັງໄດ້ພະຍາຍາມເກັບກຳເອົາ ບັນດາບໍລິສັດທີ່ທຳການຄ້າກ່ຽວກັບຜົນຜລິດກະສິກຳ ບໍລິສັດເອກະຊົນຂອງຈີນທີ່ມີຄວາມສົນໃຈຢາກມາເຄື່ອນໄຫວກ່ຽວກັບໝາກແໜ່ງ ຢູ່ຜົ້ງສາລີ.

ຜ່ານຈາກບາດກ້າວໃນການສຶກສາ ແລະ ເກັບກຳຂໍ້ມູນທີ່ຖືວ່າໄດ້ຮັບຜົນເປັນຢ່າງດີນັ້ນ, **ຄພມຜ** ກໍ່ໄດ້ດຳເນີນບາດກ້າວໃນການກະກຽມວຽກງານການນຳເອົາໝາກແໜ່ງເຂົ້າມາປູກລະດົມໃຫ້ປະຊາຊົນປູກ. ໜ້າວຽກທີ່ມີໃນບາດກ້າວໃນການກະກຽມຄືດັ່ງກ່າວກໍ່ແມ່ນໜ້າວຽກກວດກາໃຫ້ຮູ້ລະອຽດເບິ່ງວ່າ ເຕັກນິກອັນໃດທີ່ມີຄວາມເໝາະສົມ ແລະ ສາມາດນຳໃຊ້ໄດ້ດີ ແລະ ຖືກຕ້ອງກັບເງື່ອນໄຂ ດິນຟ້າອາກາດຂອງເມືອງຜົ້ງສາລີນັ້ນ, ໂຄງການໄດ້ສະເໜີເອົາໜ່ວຍງານເຕັກນິກຂອງສວນພຶກສາສາດເຂດຮ້ອນສິບສອງປັນນາ[19] ເພື່ອໃຫ້ເຂົາເຈົ້າມາທຳການສຶກສາ ແລະ ເກັບກຳຂໍ້ມູນກ່ຽວກັບສະພາບແວດລ້ອມກ່ຽວກັບດິນ. ຊຶ່ງຈາກການສຶກສາໃນຄັ້ງນັ້ນ ເຮັດໃຫ້ພວກເຮົາເຫັນໄດ້ວ່າຢູ່ຜົ້ສາລີ ໃນເຂດຮ່ອມພູ ແມ່ນສາມາດປູກໝາກແໜ່ງພັນກວາງຕຸ້ງນີ້ໄດ້, ແຕ່ຕ້ອງປູກ

---

*[19] ສວນພຶກສາສາດເຂດຮ້ອນ ຕັ້ງຢູ່ເມືອງລຸນ, ເປັນສາຂາຂອງສະຖາບັນວິທະຍາສາດຂອງຈີນ. ອາດຈະເປັນສະຖາບັນດຽວທີ່ໄດ້ທຳການຄົ້ນຄວ້າກ່ຽວກັບໝາກແໜ່ງພັນ (ZHOU 1993).*

ຢູ່ໃນບໍລິເວນທີ່ບໍ່ແມ່ນຢູ່ກ້ອງໄມ້ຮົກ (ຈຳພວກໄມ້ປ່ອງ)[20], ໃນປ່າເລົ່າໄຮ່ເຮື້ອທີ່ມີອາຍຸປະເປັນເຮື້ອບໍ່ຫລຸດຫ້າປີ[21] ຫລືໃນເນື້ອທີ່ໆມີລະດັບຄວາມສູງຈາກໜ້ານ້ຳທະເລ ບໍ່ເກີນ 1 000 ມ (ZHOU, YAO *et al.* 1999).

ເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຜົນເສຍທີ່ຈະມີການກະທົບໃສ່ປະຊາຊົນ, ທຳອິດທາງໂຄງການບໍ່ໄດ້ທຳການປຸກລະດົມໃຫ້ປະຊາຊົນປູກເປັນຈຳນວນຫລວງຫລາຍບາດດຽວໂລດ. ທາງໂຄງການໄດ້ທຳການປຸກລະດົມປະຊາຊົນ ທຳອິດມີພຽງແຕ່ 25 ຄອບຄົວທີ່ມີຄວາມສະໝັກໃຈເຂົ້າຮ່ວມໃນການທົດລອງເບື້ອງຕົ້ນ ໃນທັງໝົດຫ້າບ້ານຂອງເມືອງຜົ້ງສາລີ ຊຶ່ງຄັດເລືອກເອົາເປັນຕົວແທນຂອງແຕ່ລະເຂດ. ເປັນການທົດລອງເບື້ອງຕົ້ນທີ່ປະຕິບັດນຳຄອບຄົວຈຳນວນໜຶ່ງ ເພື່ອຢາກຮູ້ເຖິງຄວາມສາມາດຂອງຕົ້ນເບ້ຍໃນການຈັບຕິດຄືນໃໝ່ອີກຫລັງຈາກທີ່ໄດ້ທຳການຂົນສົ່ງມາແລ້ວຍາວນານກ່ອນທີ່ຈະເດີນທາງມາຮອດສະຖານທີ່ໆປູກຕົວຈິງ ແລະ ເບື້ອງໜຶ່ງ ອີກກໍ່ເພື່ອໃຫ້ຮູ້ວ່າໝາກແໜ່ງສາມາດເກີດຂຶ້ນໄດ້ບໍ່ໃນສະພາບແວດລ້ອມຂອງຢູ່ຜົ້ງສາລີ. ດ້ວຍຈຳນວນ 6 400 ເບ້ຍ ທີ່ໂຄງການໄດ້ສະໜອງໃຫ້ໃນເດືອນກໍລະກົດປີ 1998 ນັ້ນ, ມາຮອດທ້າຍປີ 1998 ຈຳນວນຕົ້ນເພີ່ມຂຶ້ນມາເປັນ 7 000 ຕົ້ນ ແລະ ມາຮອດເດືອນມີນາ 1999 ຈຳນວນຕົ້ນເພີ້ມຂຶ້ນມາເປັນ 9 600 ຕົ້ນ. ຈາກຕົວເລກທີ່ມີການຂະຫຍາຍຕົວດີດັ່ງກ່າວມັນໄດ້ຢັ້ງຢືນໃຫ້ເຮົາເຫັນໄດ້ວ່າ ຢູ່ຜົ້ງສາລີແມ່ນສາມາດປູກໝາກແໜ່ງພັນທີ່ນຳເຂົ້າມາຈາກຈີນໄດ້.

ຫລັງຈາກທີ່ໄດ້ທຳການສຶກສາເກັບກຳຂໍ້ມູນກ່ຽວກັບການຕະຫລາດ, ຫລັງຈາກທີ່ໄດ້ເດີນທາງໄປເກັບກຳຂໍ້ມູນກ່ຽວກັບສະພາບການຊື້ຂາຍກ່ຽວກັບໝາກແໜ່ງ, ຫລັງຈາກທີ່ໄດ້ທຳການສຶກສາ ແລະ ເກັບກຳຂໍ້ມູນກ່ຽວກັບເຕັກນິກທາງດ້ານການປູກຝັງກ່ຽວກັບໝາກແໜ່ງ ແລະ ຫລັງຈາກທີ່ໄດ້ທຳການທົດລອງ ການປູກໝາກແໜ່ງພັນນີ້ລົງໄປແລ້ວ, **ຄພມຜ** ກໍ່ໄດ້ເລີ້ມທຳການສົ່ງເສີມ ແລະ ປຸກລະດົມປູກໝາກແໜ່ງດພັນທີ່ນຳເຂົ້າມາຈາກຈີນຢ່າງເປັນຂະບວນໃຫຍ່.

ທາງໂຄງການ ໂດຍສົມທົບກັບ ທາງໜ່ວຍງານການຈັດຕັ້ງຂອງລັດຢູ່ທ້ອງຖິ່ນ ແລະ ກັບຄະນະກຳມະການຊີ້ນຳໂຄງການຂັ້ນແຂວງ ໄດ້ທຳການຄົ້ນຄວ້າ ແລະ ສຶກສາເຖິງຄວາມເປັນໄປໄດ້ໃນຫລັກການໃນການສະໜອງຕົ້ນແນວພັນໝາກແໜ່ງ ຊຶ່ງມີຫລາຍວິທີການດັ່ງນີ້ :

ກ) ໃຫ້ລ້າຈາກໂຄງການ ;

ຂ) ຂາຍເອົາເງິນສົດນຳປະຊາຊົນ, ແມ່ນອນວິທີການນີ້ມີມູນຄ່າທີ່ຖືວ່າສູງສຳລັບປະຊາຊົນຕໍ່ເນື້ອທີ່ໜຶ່ງເຮັກຕາ (400 ໂດລາ) ແລະ ຈະເປັນວິທີທີ່ຖືວ່າເປັນການລົງທຶນທີ່ເກີນຄວາມສາມາດຂອງເຂົາເຈົ້າ ;

ຄ) ຂາຍເປັນສິນເຊື່ອທີ່ກຳນົດເປັນສັນຍາກັນຄັກແນ່ ເອົາຕາມຫລັກການຂອງທະນາ ຄານສົ່ງເສີມກະສິກຳ ໃນການໃຫ້ສິນເຊື່ອໃນການທຳການຄ້າຜົນຜລິດກະສິກຳທີ່ທາງການຈັດຕັ້ງລັດທ້ອງຖິ່ນໄດ້ທຳການປຸກລະດົມໃຫ້ປະຊາຊົນທຳການຜລິດນັ້ນ (ທຳອິດກໍ່ແມ່ນອ້ອຍ ແລະ ຕໍ່ມາກໍ່ແມ່ນກາເຟ) ;

ງ) ຂາຍເອົາເງິນສົດ ແຕ່ໃນລາຄາຜ່ອນເພື່ອໃຫ້ປະຊາຊົນສາມາດມີເງື່ອນໄຂປູກໄດ້ ;

---

**20** *ເຫດຜົນກໍ່ຍ້ອນວ່າໄມ້ໄຜ່ ແລະ ໝາກແໜ່ງລ້ວນແຕ່ມີຮາກຂະຫຍາຍຂະໜານໄປຕາມໜ້າດິນ, ແລະ ອີກອັນໜຶ່ງບ່ອນກ້ອງໄມ້ໄຜ່ເນື້ອດິນຈະເປັນດິນສົ້ມ.*

**21** *ເລົ່າເຮື້ອອາຍຸອ່ອນ ສ່ວນໃຫຍ່ຈະປົກຄຸມໄປດ້ວຍ ຕົ້ນຕໍກໍ່ຈະມີກົກໄມ້ປະເພດໄມ້ຈຳພວກໄມ້ປໍຫູຊຶ່ງເປັນໄມ້ທີ່ໃຫຍ່ໄວ (Macarana denticulata Bl. Trema orientalis (Linn.) Bl., Mallotus paniculatus MuellArg.) ແຕ່ຕົ້ນໄມ້ປະເພດນີ້ ສ່ວນຫລາຍຈະຕາຍໃນເມື່ອອາຍຸໄດ້ 5 ປີແລ້ວ.*

ຈ) ໃຫ້ຢືມຕົ້ນເບ້ຍ ແລະ ມີການສຳລະຄືນເປັນຕົ້ນເບ້ຍເໝືອນເດີມ ໃນໄລຍະເວລາພໍທີ່ຊາວບ້ານຈະສາມາດຜລິດແນວພັນມາທົດແທນໃຫ້ໄດ້.

ຖ້ານຳໃຊ້ວິທີການ (ຂ) ແລະ (ຄ), ແລະ ວິທີການທີ່ນະໂຍບາຍໃຫ້ສູງ (ງ), ກໍ່ສະແດງໃຫ້ເຫັນວ່າ : ຜູ້ທີ່ລິງໄປປຸກລະດົມໃຫ້ປະຊາຊົນໃຫ້ທຳການຜລິດ ເຊັ່ນໂຄງການ ຄພມຜ ກໍ່ຈະບໍ່ໄດ້ມີຄວາມຮັບຜິດຊອບຫຍັງໝົດໃນເມື່ອເກີດມີກໍລະນີຄວາມເສຍຫາຍ ແລະ ຫຍຸ້ງຍາກຂຶ້ນມາຈາກການປູກພືດຊະນິດໃໝ່ນີ້. ດັ່ງນັ້ນ ຜົນສຸດທ້າຍຈຶ່ງໄດ້ກຳນົດເອົາວິທີການ (ຈ) ຍ້ອນວ່າວິທີການດັ່ງກ່າວນີ້ມັນຈະສາມາດເຮັດໃຫ້ຂະຫຍາຍເນື້ອທີ່ໃນການປູກໝາກແໜ່ງອອກໄປໃຫ້ກ້ວາງຂວາງໄດ້ຕື່ມອີກໃນອີກຫລາຍປີຂ້າງໜ້າຈາກການແຈກຢາຍໄປຕື່ມຕົ້ນເບັ້ຍທີ່ໄດ້ມາຈາກການຊຳລະຄືນຈາກຊາວບ້ານນັ້ນ. ແຕ່ລະຄອບຄົວໄດ້ກຳນົດໃຫ້ສາມາດຢືມໄດ້ໃນຈຳນວນບໍ່ໃຫ້ເກີນ 1 000 ເບ້ຍ ຫລືຈະມີເນື້ອທີ່ສວນປູກໝາກແໜ່ງຢູ່ປະມານ 0,1 ຮຕ.
ພວກເຮົາໄດ້ຮຽນແບບເຕັກນິກ ໃນການປູກຂອງປະຊາຊົນໃນ ເຂດສິບສອງປັນນາຂອງຈີນ ຍ້ອນວ່າຢູ່ທີ່ນີ້ມັນຢູ່ໃກ້ ແລະ ສະພາບແວດລ້ອມທຳມະຊາດ ແລະ ສະພາບການຜລິດກໍ່ຢາກຄ້າຍຄືກັນກັບຜົ້ງສາລີນີ້.

ໃນປີ 1999, ຄພມຜ ໄດ້ເຊັນສັນຍາກັບບໍລິສັດຂອງຈີນໃນການສະໜອງຕົ້ນເບ້ຍແນວພັນ ໝາກແໜ່ງໃນຈຳນວນ 1 350 000 ເບ້ຍເພື່ອຈັດສົ່ງໃຫ້ໃນເດືອນກໍລະກົດ ໃຫ້ແກ່ 27 ບ້ານ ໃນເຂດ ຕາເວັນຕົກສ່ຽງໃຕ້ຂອງເມືອງ ຜົ້ງສາລີ ທີ່ມີຈຳນວນຄອບຄົວຢູ່ 1 050 ຄອບຄົວ. ຈຸດປະສົງຂອງສັນຍາແມ່ນເພື່ອກຳນົດຫລັກການ ໃນການເລື່ອນການຈ່າຍສ່ວນທີ່ຍັງເຫລືອ (20 %) ໄປຈ່າຍໃສ່ເດືອນຕຸລາ 2001 ແລະ ເປັນການກຳນົດໃນເງື່ອນໄຂທີ່ວ່າກ່ອນຈະຈ່າຍສ່ວນທີ່ຍັງເຫລືອຕ້ອງມີການຮັບຊື້ຜົນຜລິດທີ່ອອກມານັ້ນຈາກທາງບໍລິສັດຂອງຈີນ[22].

ທາງ ຄພມຜ ເຊັນສັນຍາເປັນການອະນຸມັດ ເບ້ຍໝາກແໜ່ງໃຫ້ແກ່ທາງເມືອງ ແຕ່ການແຈກ ຢາຍຕົວຈິງກໍ່ຍັງແມ່ນພາລະຂອງໂຄງການຢູ່. ໃນເວລານັ້ນ ປະຊາຊົນ ແຕ່ລະຄອບຄົວ ກໍ່ໄດ້ເຊັນສັນຍານຳທາງເມືອງ ແລະ ໃນສັນຍາທີ່ປະຊາຊົນເຊັນກັບທາງເມືອງນີ້ກໍ່ໄດ້ລະບຸຄັກແນ່ ເງື່ອນໄຂໃນການແຈກຢາຍ[23] ແລະ ເງື່ອນໃນການກຳນົດການໃຊ້ແທນຄືນເປັນວັດຖຸ (ເປັນເບ້ຍ ໝາກແໜ່ງເໝືອນເດີມ).
ການຕິດຕາມວຽກງານການປູກໝາກແໜ່ງໃນເບື້ອງຕົ້ນໄດ້ເຮັດໃຫ້ເຮົາເຫັນວ່າເບ້ຍໝາກແໜ່ງທີ່ນຳມາປູກນັ້ນຕາຍຫລາຍ. ຂໍ້ມູນທີ່ເກັບກຳໄດ້ໃນເດືອນມັງກອນໄດ້ຊີ້ໃຫ້ເຮົາໄດ້ເຫັນວ່າ ມີພຽງແຕ່ 27 % ເປັນຕົ້ນທີ່ຍັງເຫລືອຈາກຈຳນວນເບ້ຍທີ່ໄດ້ນຳມາປູກໃນເດືອນກໍລະກົດ ປີ 1999 ນັ້ນ. ອັນນີ້ອາດມາຈາກຫລາຍສາເຫດເຊັ່ນ :

- ໄລຍະເວລາຈາກມື້ຫລົກມາຫາມື້ປູກແມ່ນມີໄລຍະດົນເກີນໄປ. ບາງຕົ້ນເບ້ຍແຫ້ງຫລາຍ ; ເອົາມາປູກແລ້ວກໍ່ຕາຍໄປກ່ອນຈະອອກໜໍ່ ;
- ການຈັດສົ່ງໃນແຕ່ລະຄັ້ງມີຈຳນວນເບ້ຍຫລາຍເກີນໄປ, ເບ້ຍຊ້ຳເປັນເບ້ຍທີ່ບວບຊ້ຳ ຈາກການຂົນສົ່ງ, ຕົ້ນຕໍ່ແມ່ນບວບຊ້ຳຍ້ອນເຕັງກັນຈາກການບັນຈຸທີ່ສູງເກີນໄປ ແລະ ອີກອັນໜຶ່ງ ໃນແຕ່ລະຄັ້ງກໍ່ມີຈຳນວນເບ້ຍເຖິງ 230 000 ເບ້ຍຈຳເປັນຕ້ອງໄດ້ໃຊ້ເວລາຫລາຍ.

---

*22 ປະຊາຊົນມີສິດທີ່ຈະຂາຍ ຫລື ບໍ່ຂາຍໃຫ້ບໍລິສັດຈີນກໍ່ໄດ້, ຂຶ້ນກັບລາຄາທີ່ຊື້ຂາຍກັນໃນໄລຍະນັ້ນ; ແຕ່ໃນນີ້ບໍລິສັດຈີນຕ້ອງໄດ້ຮັບຜິດຊອບຢູ່ບ່ອນວ່າທັງໝົດຜົນຜລິດທີ່ອອກມາຕ້ອງສາມາດໃຫ້ຂາຍໄດ້ ແລະ ຮັບປະກັນບໍ່ໃຫ້ມີຜົນຜລິດທີ່ຕົກຄ້າງ.*

*23 ຄພມຜ ເປັນຜູ້ຮັບຜິດຊອບໃນການແຈກຢາຍເບ້ຍໝາກແໜ່ງຕາມຈຸດຕ່າງໆທີ່ໄດ້ຕົກລົງນຳກັນກັບຊາວບ້ານເປັນທີ່ຮຽບຮ້ອຍແລ້ວ ແຕ່ມັນຕ້ອງເປັນທີ່ບ່ອນລົດ ຫລື ເຮືອໄປຮອດໄປເຖິງ. ຈາກນັ້ນກໍ່ຈະແມ່ນຊາວບ້ານເອງເປັນຜູ້ຮັບຜິດຊອບໃນການເປ້ເອົາ ຫລື ດ້ວຍມ້າ ຈົນໄປຮອດບ່ອນທີ່ຈະປູກນັ້ນ.*

- ສ່ວນຫລາຍແລ້ວໃນການຈັດສົ່ງໃນປີນັ້ນເປັນຕົ້ນແກ່ ແລະ ກໍ່ໄດ້ຕັດໃບອອກ ເຮັດໃຫ້ຕົ້ນແມ່ນັ້ນບໍ່ສາມາດປົ່ງຂຶ້ນມາໄດ້ອີກ ແຕ່ສິ່ງທີ່ປົ່ງອອກມາໃນຄັ້ງນັ້ນສ່ວນຫລາຍກໍ່ອາໃສແຕ່ໜໍ່ໃໝ່.
- ລະດູໃນການຈັດສົ່ງຫລ້າສວາຍເກີນໄປ (ແຕ່ກາງເດືອນ ຫາ ທ້າຍເດືອນກໍລະກົດ), ໃນຊ່ວງນີ້ກໍ່ໝາຍວ່າ ລະດູຝົນຍັງເຫລືອພຽງແຕ່ສອງເດືອນເທົ່ານັ້ນທີ່ຈະສາມາດເຮັດໃຫ້ຕົ້ນແມ່ຈັບຕິດຄືນ ແລະ ອີກເບື້ອງໜຶ່ງໃນລະດູການດັ່ງກ່າວເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການຈັດການການແຈກຢາຍ, ເປັນລະດູນໍ້າມາກ, ຫົນທາງໝົ່ນລົດໃຫຍ່ໄປບໍ່ໄດ້ເຮັດໃຫ້ການຈັດສົ່ງແກ່ຍາວເວລາອອກໄປຕື່ມອີກ.

ຈາກການສັງເກດເຫັນຂໍ້ຫຍຸ້ງຍາກ ແລະ ຂໍ້ຂາດຕົກບົກຜ່ອງຄືດັ່ງກ່າວ, ທາງໂຄງການກໍ່ໄດ້ທຳການດັດແກ້ການດຳເນີນການໃນການແຈກຢາຍເບ້ຍໝາກແໜ່ງຄືດັ່ງກ່າວສຳລັບປີ 2000. ໃນປີນີ້ພວກເຮົາໄດ້ທຳການແຈກຢາຍໃຫ້ໃນຕົ້ນລະດູກ່ອນເກົ່າຄືໃນຊ່ວງເດືອນມິຖຸນາ ແລະ ທຳການຈັດສົ່ງເປັນຫລາຍໆຊຸດກວ່າເກົ່າ[24], ແຕ່ລະຊຸດຈະຈັດສົ່ງບໍ່ຫລາຍໃຫ້ມີຫລາຍບ້ານເໝືອນແຕ່ກ່ອນ, ມີຈຳນວນຕົ້ນເບ້ຍບໍ່ຫລາຍ (ເປັນຕົ້ນທີ່ອ່ອນກວ່າເກົ່າ ແລະ ມີໃບ) ແລະ ໃນລົດບັນທຸກແຕ່ລະຄັນກໍ່ບໍ່ໃຫ້ບັນຈຸຫລາຍ, ດັ່ງນັ້ນໃນປີ 2000 ນີ້ຈຶ່ງສັງເກດເຫັນວ່າການຕິດຈັບຄືນຂອງຕົ້ນແມ່ທີ່ປູກກໍ່ຫລາກວ່າທີ່ປູກໃນປີ 1999 ນັ້ນ. ໃນກາງປີ 2001. ສວນທີ່ປູກຍັງມີຈຳນວນຕົ້ນແມ່ທີ່ສາມາດຈັບຕິດຄືນໄດ້ເຖິງ 63 % ຂອງຈຳນວນເບ້ຍທີ່ປູກໃນເບື້ອງຕົ້ນ.

ຕົກມາໃນປີ 2001 **ຄພມຜ** ກໍ່ໄດ້ສືບຕໍ່ວຽກງານດັ່ງກ່າວອີກໃນຮູບແບບວິທີເດີມ, ການຈັດສົ່ງໃນປີນີ້ເປັນການຈັດສົ່ງໃຫ້ບັນດາບ້ານທີ່ຍັງບໍ່ທັນ ໄດ້ທຳການຈັດສົ່ງໃຫ້ໃນປີທີ່ຜ່ານມາຂອງເມືອງຜົ້ງສາລີ : ສຳລັບການຈັດສົ່ງໃນປີນີ້ໄດ້ຈັດສົ່ງສົ່ງໃຫ້ແກ່ຈຳນວນ 830 ຄອບຄົວ ໃນ 30 ບ້ານທີ່ມີຈຳນວນເບ້ຍຢູ່ 880 000 ເບ້ຍ.

ຕົກມາຮອດທ້າຍປີ 2001 ນີ້ມີຈຳນວນ 4 900 ຄອບຄົວ ໄດ້ເລີ້ມຕົ້ນທຳການປູກໝາກແໜ່ງພັນໄປແລ້ວໃນທັງໝົດ 87 ບ້ານຂອງເມືອງຜົ້ງສາລີ ໝາຍວ່າ : ມີ 72 % ຂອງຈຳນວນຄອບຄົວປະຊາຊົນທີ່ເປັນຊາວຊົນນະບົດ ເມືອງຜົ້ງສາລີ ໄດ້ຕອບຮັບດ້ວຍຄວາມເຕັມໃຈຕໍ່ສິ່ງທີ່ທາງໂຄງການໄດ້ທຳການປຸກລະດົມລົງໄປນັ້ນ, ໃນເງື່ອນໄຂທີ່ມີພັນທະຕໍ່ກັນລັກແນ່ ແລະ ກໍ່ໄດ້ປູກໄປແລ້ວໃນເນື້ອທີ່ 220 ຮຕ. ໃນວຽກງານການສົ່ງເສີມການປູກໝາກແໜ່ງ ທາງໂຄງການກໍ່ໄດ້ລົງທຶນໄປ 150 000 ໂດລາ ເພື່ອທຳການຊອກຫາ ແລະ ຈັດຊື້ເບ້ຍແນວພັນມາທຳການຈັດສົ່ງໃຫ້ປະຊາຊົນ.

ໃນຕົວຈິງແລ້ວ ການເກັບໝາກແໜ່ງປ່າຂອງປະຊາຊົນໃນເຂດນີ້ແມ່ນເຄີຍມີມາແຕ່ດົນນານແລ້ວ ແຕ່ສຳລັບໝາກແໜ່ງພັນນີ້ພັດເປັນການຜລິດທີ່ນຳເຂົ້າມາປູກເປັນການຜລິດອັນໃໝ່ ແລະ ກໍ່ແມ່ນແນວຄວາມຄິດລິເລີ້ມຂອງຊາວບ້ານເອງ ແຕ່ເປັນການຊຸກຍູ ແລະ ສົ່ງເສີມຈາກ **ຄພມຜ** : ໜ່ວຍງານຂອງໂຄງການໄດ້ຊີ້ນຳນຳພາປະຊາຊົນປູກຢູ່ກັບພື້ນທີ່ຕົວຈິງໂລດ ແລະ ນອກນັ້ນອີກທາງໂຄງການກໍ່ຍັງໄດ້ຈັດຕັ້ງກັນເດີນທາງໄປທັດສະນະສຶກສາຢູ່ຈີນ.

**24** *ໃນປີ 2000 ນີ້ໄດ້ທຳການຈັດສົ່ງເປັນ 13 ຊຸດ ແຕ່ລະຊຸດມີປະມານ 77 000 ເບ້ຍ ແທນທີ່ຈະຈັດສົ່ງເປັນພຽງແຕ່ຫ້າຊຸດ ແຕ່ລະຊຸດມີ 230 000 ເບ້ຍ ເໝືອນກັນກັບປີ 1999.*




*ຮູບ 9 : ບັນດາບ້ານທີ່ໄດ້ທຳການປູກໝາກແໜ່ງໄປແລ້ວຍ້ອນມີການຊຸກຍູ້ ແລະ ຊ່ວຍເຫລືອຈາກ* ***ຄພມຜ***

ໃນການເດີນທາງໄປທັດສະນະສຶກສາຢູ່ຈີນນີ້, ແຕ່ລະບ້ານກໍ່ໄດ້ຄັດເລືອກເອົາຕົວແທນໄປຮ່ວມ ໂດຍວາງເງື່ອນໄຂໃຫ້ວ່າຜູ້ກ່ຽວຕ້ອງເປັນອາສາສະໝັກວິຊາການໝາກແໜ່ງປະຈຳບ້ານ ; ໃນເມື່ອຄັດເລືອກເອົາມາແລ້ວຜູ້ກ່ຽວກໍ່ໄດ້ເດີນທາງໄປທັດສະນະສຶກສາຢູ່ເຂດສິບສອງປັນນາຂອງຈີນ ທັງນີ້ກໍ່ເພື່ອ :

- ເປັນການຝຶກອົບຮົມໃຫ້ແກ່ປະຊາຊົນໃນວິຊາການປູກໝາກແໜ່ງ ຈາກບົດຮຽນທີ່ປະຊາຊົນຂອງຈີນໄດ້ຮັບຜ່ານມານັ້ນ;
- ເຮັດໃຫ້ປະຊາຊົນຊາວຊົນນະບົດຂອງເມືອງຜົ້ງສາລີໄດ້ພົບປະ ແລະ ສາມາໂອ້ລົມໂດຍກົງກັບພໍ່ຄ້າຈີນທີ່ຮັບຊື້ໝາກແໜ່ງ ເພື່ອໃຫ້ໄດ້ຮັບຮູ້ເຖິງມາດຕະຖານທາງດ້ານຄຸນນະພາບຂອງໝາກແໜ່ງ ແລະ ເພື່ອໃຫ້ຮູ້ລະອຽດດີລະດັບຄວາມຕ້ອງ ກໍ່ຄື ການຈັດຕັ້ງຂອງພໍ່ຄ້າທີ່ຮັບຊື້ໝາກແໜ່ງເລົ່ານັ້ນ. ;
- ເຮັດໃຫ້ປະຊາຊົນຊາວຊົນນະບົດເມືອງຜົ້ງສາລີໄດ້ຮູ້ຄວາມສຳຄັນຂອງໝາກແໜ່ງໃນ ໄລຍະຜ່ານມາ ກໍ່ຄື ໃນປະຈຸບັນ ທີ່ມີຕໍ່ເສດຖະກິດຂອງຈີນ.

ຕັ້ງແຕ່ເດືອນມັງກອນ ຫາ ເດືອນ ທັນວາປີ 2000 ທາງໂຄງການໄດ້ຈັດຕັ້ງກັນເດີນທາງໄປທັດສະນະສຶກສາເປັນສາມຊຸດ, ໝາຍວ່າທຸກໆບ້ານຂອງເມືອງຜົ້ງສາລີໄດ້ພົວພັນກັບວຽກງານການເດີນທາງໄປທັດສະນະສຶກສາກ່ຽວກັບໝາກແໜ່ງນີ້, ໃນການເດີນທາງໄປທັດສຊະນະສຶກສານັ້ນກໍ່ຍັງມີ ພະນັກງານຂອງໂຄງການ ແລະ ພະນັກງານຈາກການຈັດຕັ້ງລັດທ້ອງຖິ່ນ (ຂອງແຂວງ ແລະ ຂອງເມືອງຜົ້ງສາລີ).

## ຜົນງານກ່ຽວກັບໝາກແໜ່ງທີ່ປະຕິບັດມາໄດ້ຈົນເຖິງປະຈຸບັນ : ບົດຮຽນທີ່ດີທີ່ຄວນຈະສົ່ງເສີມ

ຕົກມາຮອດເດືອນສິງຫາ ປີ 2001 ນີ້, ໝາກແໜ່ງໃນຊຸດປີທຳອິດແມ່ນສາມາດເກັບກ່ຽວໄປແລ້ວຈາກເນື້ອທີ່ໆໄດ້ທົດລອງທຳການປູກມາໃນປີ 1998 ນັ້ນ, ດ້ວຍສະມັດຕະພາບໃນການຜລິດ 64 ກລ/ຮຕ (ເປັນໝາກແໜ່ງແຫ້ງ), ໝາກຜົນທີ່ອອກຄືດັ່ງກ່າວກໍ່ເຫັນວ່າເປັນໜ້າພໍໃຈ, ແຕ່ໃນນີ້ພາຍໃນບ້ານໜຶ່ງໆ ສະມັດຕະພາບດັ່ງກ່າວຍັງມີແຕກຕ່າງກັນຫລາຍ ແລະ ໃນແຕ່ລະບ້ານກໍ່ຍັງມີແຕກຕ່າງກັນໄປອີກເໝືອນກັນ (ແຕ່ 0 ຫາ 380 ກລ/ຮຕ).

ມາຮອດທ້າຍປີ 2003 ນີ້, ທົ່ວເມືອງຜົ້ງສາລີ ໃນເມື່ອມີການປູກຂະຫຍາຍເນື້ອທີ່ອອກໄປ ເນື້ອທີ່ໃນການປູກໝາກແໜ່ງກໍ່ຂຶ້ນມາເຖິງ 270 ຮຕ. ຜົນຜລິດກໍ່ກຳລັງຢູ່ໃນໄລຍະມີການເພີ້ມຂຶ້ນຢູ່ເລື້ອຍໆ (*ເບິ່ງໃນ. ຮູບ 7*) ຊຶ່ງໄດ້ຂຶ້ນມາເປັນ 1 100 ກລ ໝາກແໜ່ງແຫ້ງໃນປີ 2002 ໃນມູນຄ່າ 20 ລ້ານກີບ (1 900 ໂດລາ) ແລະ 3 ໂຕນ ໃນມູນຄ່າ 60 ລ້ານກີບ (5 700 ໂດລາ) ໃນປີ 2003, ແຕ່ນີ້ອີກສີ່ຫາຫ້າປີຂ້າງໜ້າ ຄາດວ່າລາຍໄດ້ຈາກການຂາຍໝາກແໜ່ງຢ່າງໜ້ອຍກໍ່ຈະມີເຖິງ 600 ລ້ານກີບ (57 000 ໂດລາ) ໃນເນື້ອທີ່ດັ່ງກ່າວ.

ເຖິງວ່າຜົນງານຕົວເລກອອກມາຄືດັ່ງກ່າວຈະເປັນທີ່ໜ້າເພິ່ງພໍໃຈ ແຕ່ການດຳເນີນງານຕົວຈິງກໍ່ຍັງໄດ້ປະສົບກັບຄວາມຫຍຸ້ງຍາກບາງປະການ, ມັນບໍ່ແມ່ນບັນຫາພື້ນຖານ ແຕ່ມັນຮຽກຮ້ອງໃຫ້ໜ່ວຍງານຂອງໂຄງການຈະຕ້ອງໄດ້ເອົາໃຈໃສ່ ມີຄວາມລະມັດລະວັງ ທັງນີ້ກໍ່ເພື່ອເຮັດໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດສູງສຸດຈາກວຽກງານການປູກໝາກແໜ່ງ, ຊຶ່ງບັນຫາດັ່ງກ່າວມີດັ່ງນີ້ :

- ເລີ້ມແຕ່ປີ 2000[25] ເປັນຕົ້ນມາລາຄາໝາກແໜ່ງແມ່ນຫລຸດລົງຫລາຍ ອັນນີ້ກໍ່ອາດມີສາເຫດຈາກການຍຸບຕົວຂອງຫລາຍບໍລິສັດຜລິດຢາຂອງລັດຂອງຈີນເອງ ຊຶ່ງບໍລິສັດຜລິດຢາດັ່ງກ່າວໃນໄລຍະຜ່ານມາຈະມີບົດບາດຫລາຍພໍສົມຄວນໃນການກຳນົດລາຄາໝາກແໜ່ງ ຢູ່ເຂດສິບສອງປັນນາ (SAINTPIERRE 2003), ແລະ ນອກຈາກນັ້ນກໍ່ຍັງມີສາເຫດມາຈາກຜົນຜລິດໃນຂົງເຂດນີ້ໃນຊ່ວງໄລຍະເວລາດັ່ງກ່າວ ແມ່ນມີຫລາຍ (ຢູ່ລາວ, ຈີນ, ມຽນມາ).
  ເຖິງແມ່ນວ່າລາຄາໝາກແໜ່ງຈະສູງຂຶ້ນມາແດ່ເລັກນ້ອຍໃນປີ 2003 ຍ້ອນມີການປັບປຸງຄືນໃໝ່ໃນລະບົບວຽກງານການຄ້າໝາກແໜ່ງ ແຕ່ລາຄາດັ່ງກ່າວໃນຕໍ່ໜ້າກໍ່ຍັງຈະມີການອ່ອນໄຫວໄປຕາມລາຄາຂອງໝາກແໜ່ງທີ່ທຳການຊື້ຂາຍກັນໃນບັນດາແຂວງຕ່າງໆຂອງຈີນຢູ່.[26]
- ບັນດາເງື່ອນໄຂໃນການຈັດຕັ້ງການຊື້ຂາຍໝາກແໜ່ງຍັງບໍ່ໄດ້ຈັດຕັ້ງກັນເປັນລະບົບຄັກແນ່ເພື່ອວ່າພໍຈະເຮັດໃຫ້ປະຊາຊົນສາມາດຕໍ່ລອງລາຄາໄດ້ ມັນສະແດງໃຫ້ເຮົາເຫັນໄດ້ວ່າລາຄາໝາກແໜ່ງຢູ່ຜົ້ງສາລີ ແມ່ນມີລາຄາຕ່ຳກວ່າລາຄາຢູ່ເຂດສິບສອງປັນນາຂອງຈີນ ຫລາຍ.
  ການຂາຍໝາກແໜ່ງແມ່ນຕົກໃສ່ໃນຊ່ວງແຕ່ທ້າຍເດືອນ ສິງຫາ ຫາ ຕົ້ນເດືອນກັນຍາ ຊຶ່ງເປັນໄລຍະພໍດີກັນກັບເວລາທີ່ປະຊາຊົນກຳລັງອຶດເຂົ້າ ຫລື ຂາດເຂົ້າກິນ. ໃນຊ່ວງນີ້ຖ້າພໍມີເງື່ອນໄຂປະຊາຊົນເຂົາເຈົ້າຈະຮີບຮ້ອນຂາຍຜົນຜລິດຂອງຕົນອອກໄປເພື່ອໃຫ້ໄດ້ເງິນມາຊື້ເຂົ້າກິນ

---

**25** *ລາຄາໝາກແໜ່ງແຫ້ງຢູ່ຈີນ ແຕ່ປີ 1995-1998 ແມ່ນຕັ້ງແຕ່ 5 ຫາ 7 ໂດລາ, ລາຄາຈະຫລຸດລົງຫລາຍໃນປີ 2002 ໃນລາຄາບໍ່ເຖິງ 2 ໂດລາ/ກກ.*

**26** *ນອກຈາກມີຜົນຜລິດທີ່ອອກມາຈາກເຂດແຂວງທີ່ມີມູນເຊື້ອໃນການຜລິດໝາກແໜ່ງແລ້ວ (ແຂວງກວາງຕຸ້ງ, ເຂດສິບສອງປັນນາ) ແລ້ວກໍ່ຍັງມີເຂດແຂວງອື່ນໆອີກເຊັ່ນ ແຂວງກວາງຊີ ແລະ ແຂວງກຸຍຊູ ທີ່ມີທ່າແຮງບໍ່ຫລາຍໃນການປູກໝາກແໜ່ງແຕ່ກໍ່ມີຜົນຜລິດທີ່ຈະອອກມາເປັນສ່ວນເຮັດມີຜົນຕໍ່ລາຄາໝາກແໜ່ງໄດ້ເໝືອນກັນ (SAINTPIERRE 2003).*

ການຕາກໝາກແໜ່ງໃສ່ສາດ ແລະ ຜຶ່ງອອກໃສ່ແດດໃນຊ່ວງນີ້ຈະບໍ່ໄດ້ມາດຕະຖານດີຍ້ອນມັນແມ່ນຊ່ວງກາງລະດູຝົນ. ໝາກແໜ່ງທີ່ຂາຍອອກຈະເປັນໝາກແໜ່ງທີ່ບໍ່ໄດ້ແຫ້ງດີ ; ດັ່ງນັ້ນມັນຈຶ່ງຖືກກຳນົດເປັນໝາກແໜ່ງທີ່ມີຄຸນນະພາບຕ່ຳ ແລະ ເພື່ອຮອງຮັບຜົນເສຍຈາກການຕາກແຫ້ງບໍ່ໄດ້ມາດຕະຖານຈຶ່ງຕົກມາເປັນພູດຂອງປະຊາຊົນ ຄືໄດ້ຮັບລາຄາຂາຍທີ່ຕ່ຳ.

ໝາກແໜ່ງພັນທີ່ປູກ ຢູ່ຜົ້ງສາລີຍັງມີ ຈຳນວນບໍ່ຫລາຍ ເມື່ອສົມທຽບໃສ່ກັບໝາກແໜ່ງປ່າທີ່ຜົ້ງສາລີສົ່ງອອກ ດັ່ງນັ້ນການໄຈ້ແຍກລາຄາລະຫວ່າງໝາກແໜ່ງປ່າ ແລະ ໝາກແໜ່ງພັນຈະບໍ່ມີການໄຈ້ແຍກ, ສ່ວນຫລາຍມັກງ່າຍກໍ່ຂາຍອອກປົນເປກັນໄປເປັນລາຄາອັນດຽວກັນກັບໝາກແໜ່ງປ່າ.

ປະຈຸບັນທາງໂຄງການ ໂດຍເປັນການສົມທົບກັບຊາວບ້ານກຳລັງດຳເນີນການເພື່ອແກ້ໄຂພາກສ່ວນໃດພາກສ່ວນໜຶ່ງຂອງບັນຫາທີ່ກ່າວມາຂ້າງເທິງນັ້ນ ເຊັ່ນ :

- ທຳການຊຸກຍູ້ ແລະ ຊ່ວຍເຫລືອປະຊາຊົນໃນການກໍ່ສ້າງເຕົາຢ້າງໝາກແໜ່ງທັງນີ້ກໍ່ເພື່ອ *(i)* ຍົກສູງຄຸນນະພາບຂອງຜົນຜລິດ, *(ii) ສ້າງເງື່ອນໃຫ້ປະຊາຊົນມີຄວາມສາມາດໃນການການຕໍ່ລອງລາຄາໂດຍເຮັດໃຫ້ມີການເກັບຮັກສາຜົນຜລິດໄວ້ໃນຊ່ວງໄລຍະໃດໜຶ່ງ* ແລະ *(iii)* ຫລຸດຜ່ອນໄລຍະເວລາທີ່ນຳໃຊ້ໃນການຕາກໝາກແໜ່ງນັ້ນລົງ.
- ການສົ່ງເສີມກາຄ້າກ່ຽວກັບໝາກແໜ່ງພັນຂອງຜົ້ງສາລີ ທັງນີ້ກໍ່ເພື່ອເຮັດໃຫ້ປະຊາຊົນໄດ້ລາຄາດີເປັນພິເສດ ຈາກໝາກແໜ່ງພັນນັ້ນ.

ການດຳເນີນງານໜ້າວຽກຂອງໂຄງການໃນການຊຸກຍູ້ ແລະ ປຸກລະດົມປະຊາຊົນໃຫ້ປະຊາຊົນທຳການຜລິດໃຫ້ເປັນສິນຄ້າເຊັ່ນ ໝາກແໜ່ງເປັນຕົ້ນ ຈະບໍ່ໄດ້ຈຳກັດໜ້າວຽກຂອງຕົນພຽງແຕ່ໃຫ້ການຊ່ວຍເຫລືອໃນການຈັດຫາແນວພັນ ແລະ ທຳການເຜີຍແຜ່ເຕັກນິກໃນການປູກໝາກແໜ່ງເທົ່ານັ້ນ, ແຕ່ຍັງໄດ້ດຳເນີນວຽກງານກ່ຽວກັບວຽກງານທີ່ມີໃນຕ່ອງໂສ້ການຄ້າໝາກແໜ່ງ ແລະ ພ້ອມກັນນັ້ນກໍ່ຍັງມີການຊ່ວຍເຫລືອທາງດ້ານເຕັກນິກ ແລະ ທາງດ້ານເສດຖະກິດອີກ.

## ບົດຮຽນທີ່ຖອດຖອນມາໄດ້ : ສິ່ງຈະຕ້ອງໄດ້ປະຕິບັດເພື່ອເຮັດໃຫ້ການການປຸກລະດົມປະຊາຊົນໃຫ້ຫັນມາປູກພືດເສດຖະກິດໄດ້ຮັບຜົນ

ໃນເຂດພູດອຍຂອງ ສປປ ລາວ, ປະຊາຊົນຊາວຊົນນະບົດຈະທຳການຖາກຖາງປ່າເພື່ອໃຫ້ໄດ້ຮັບຄວາມສົມດຸນທີ່ມີໃນສອງຮອບວຽນຂອງການຜລິດກະສິກຳດ້ວຍການຖາງປ່າເຮັດໄຮ່ນັ້ນ (CHAZEE 1998) :

- ໄລຍະເວລາທີ່ທຳການຜລິດທີ່ມີໄລຍະສັ້ນ (ໜຶ່ງ ຫາ ສາມປີ), ຊຶ່ງເປັນການນຳໃຊ້ຄວາມອຸດົມສົມບູນຂອງດິນທີ່ໄດ້ມາຈາກຊີວະມວນ (*biomass*) ຂອງປ່າໄມ້ ;
- ໄລຍະເວລາທີ່ປະເປັນເຮື້ອທີ່ໃຊ້ເວລາຫລາຍປີພໍປະມານ (ໜຶ່ງ ຫາ ຊາວປີ), ໃນໄລຍະເວລາດັ່ງກ່າວນີ້ຄວາມອຸດົມສົມບູນຂອງດິນແມ່ນໄດ້ມາຈາກການປົ່ງຄືນຂຶ້ນມາໃໝ່ຂອງປ່າໄມ້.

ລະບົບການຜລິດຄືດັ່ງກ່າວຖືວ່າເປັນລະບົບການຜລິດທີ່ມີປະສິດຕິພາບດີໃຫ້ແກ່ເສດຖະກິດ ຂອງຄອບຄົວຊຶ່ງມັນເປັນລະບົບທີ່ມີຄວາມຮັບປະກັນດີ ແລະ ເຮັດໃຫ້ງານມີສະມັດຕະພາບດີ (DUFUMIER 1996;

DUCOURTIEUX 2004). ການເຮັດໄຮ່ເປັນວິທີການຜລິດທີ່ໄດ້ສືບຕໍ່ປະຕິບັດກັນມາໄດ້ຫລາຍຮ້ອຍປີຜ່ານມາແລ້ວ ແຕ່ມັນກໍ່ຍັງບໍ່ໄດ້ກໍ່ໃຫ້ເກີດຜົນກະທົບອັນຮ້າຍແຮງອັນໃດໃຫ້ແກ່ສະພາບແວດລ້ອມປ່າໄມ້ຂອງລາວ. ແນ່ນອນໂດຍລວມແລ້ວ ການຜລິດດ້ວຍວິທີການຖາງປ່າເຮັດເປັນການຜລິດທີ່ບໍ່ມີຄວາມຍືນຍົງ, ອັນນີ້ກໍ່ຍ້ອນວ່າໃນເມື່ອມີການເພີ້ມຂຶ້ນ ຂອງພົນລະເມືອງ ມັນກໍ່ຈະເຮັດໃຫ້ ຮອບວຽນໃນການຖາງປ່າເຮັດໄຮ່ໄວຂຶ້ນກວ່າເກົ່າ (DUFUMIER 1999). ໃນເມື່ອໄລຍະເວລາປະເປັນຮອບວຽນຂອງເລົ່າໄຮ່ເຮື້ອຫາກມີອາຍຸບໍ່ເຖິງສາມ ຫລື ສີ່ປີ, ຄວາມອຸດົມສົມບູນຂອງດິນກໍ່ຈະບໍ່ມີພຽງພໍ ແລະ ສະພາບການຊະລ້າງຂອງດິນກໍ່ຈະຮ້າຍແຮງ (RAMAKRISHNAN 1992; MOA, VALENTIN *et al.* 2002; VAN KEER 2003).

ແຕ່ເພື່ອປ້ອງກັນບໍ່ໃຫ້ເກີດມີວິກິດ ການໃນລະບົບການຜລິດກະສິກຳດ້ວຍວິທີການຖາງປ່າເຮັດໄຮ່ນັ້ນ ແລະ ເພື່ອຈຳກັດຜົນກະທົບທີ່ມີຕໍ່ສະພາບແວດລ້ອມ ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ວາງແຜນປ້ອງກັນໄວ້ລ່ວງໜ້າສາກ່ອນ ແລະ ພ້ອມກັນນັ້ນກໍ້ຕ້ອງທຳການສົ່ງເສີມໃຫ້ມີລະບົບການຜລິດອັນໃໝ່ເກີດຂຶ້ນ ໂດຍອີງໃສ່ການຜລິດໃຫ້ເປັນສິນຄ້າ, ທັງນີ້ກໍ່ເພື່ອ :

- ຍົກສູງລະດັບຊີວິດ ການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍການເຮັດໃຫ້ລາຍຮັບທາງດ້ານເງິນສົດຂອງເຂົາເຈົ້າເພີ້ມຂຶ້ນ.
- ຫັນປ່ຽນຈາກການຜລິດ ເຂົ້າໂດຍກົງມາເປັນການຊື້ເຂົ້າມາກິນ, ທັງນີ້ກໍ່ເພື່ອໃຫ້ສາມາດຫລຸດຜ່ອນເນື້ອທີ່ໃນ ການຖາງປ່າເຮັດໄຮ່ໃນແຕ່ລະປີນັ້ນລົງ ແລະ ຮັກສາອາຍຸຮອບວຽຂອງການຖາງປ່າເຮັດໄຮ່ນັ້ນໃຫ້ຍັງມີຫລາຍປີຕໍ່ຮອບວຽນໜຶ່ງ.

ແຕ່ເຖິງຢ່າງໃດກໍ່ຕາມ, ການປູກພືດເສດຖະກິດຍັງຈະບໍ່ແມ່ນທາງເລືອກທີ່ດີເພື່ອມາທົດແທນໃຫ້ແກ່ການຖາງປ່າເຮັດໄຮ່ໄດ້. ໃນບາງກໍລະນີ ຄວາມຜິດພາດໃນການກຳນົດເອົາພືດບາງອັນມາຈັດຕັ້ງປະຕິບັດອາດຈະເຮັດໃຫ້ປະຊາຊົນຕົກທຸກໄດ້ຍາກລົງໄປຕື່ມອີກ ແລະ ຍັງຈະເຮັດໃຫ້ສະພາບແວດລ້ອມປ່າໄມ້ເສື່ອມໂຊມລົງອີກນຳ. ການປຸກລະດົມປະຊາຊົນໃຫ້ຫັນມາທຳການປູກອ້ອຍໃນເຂດພື້ນທີ່ສູງຂອງເມືອງຜົ້ງສາລີກໍ່ເຮັດໃຫ້ເນື້ອທີ່ດິນມີການເສື່ອມໂຊມລົງໄປ ຈາກການນຳໄປໃຊ້ຈົນໝົດແຮ່ທາດອາຫານຂອງຄວາມອຸດົມສົມບູນຂອງດິນ[27], ແລະ ພ້ອມກັນນັ້ນກໍ່ຈະມີຜົນກະທົບຕໍ່ລາຍຮັບທີ່ມີໃນລະດັບຄອບຄົວເໝືອນກັນ (DUCOURTIEUX 2000). ຄວາມຜິດພາດໃນການກຳນົດແຜນນະໂຍບາຍ ແລະ ຄວາມຜິດພາດຂອງໂຄງການພັດທະນາ ທີ່ມີຜົນກະທົບໂດຍກົງ ແລະ ທາງອ້ອມຕໍ່ຊີວິດການເປັນຢູ່ຂອງປະຊາຊົນນັ້ນ ສາຍ ເຫດຕົ້ນຕໍຂອງມັນກໍ່ແມ່ນ ມາຈາກການຂາດຄວາມ ເອົາໃຈໃສ່ໃນການສຶກສາເກັບກຳຂໍ້ມູນ ແລະ ຂາດຄວາມຮັບຮູ້ບັນດາເງື່ອນ ໄຂສະພາບໃນການຜລິດກະສິກຳຂອງປະຊາຊົນທີ່ມີໃນທ້ອງຖິ່ນນັ້ນໆ. ຕົວຈິງແລ້ວ ເຖິງແມ່ນວ່າຜູ້ທີ່ທຳການປຸກລະດົມສົ່ງເສີມປະຊາຊົນໃຫ້ທຳການຜລິດພືດເສດຖະກິດນັ້ນຫາກໄດ້ຄຳນຶງເຖິງການປັບຕົວການປູກຝັງໃຫ້ເຂົ້າກັບສະພາບຄວາມເປັນຈິງຂອງພື້ນທີ່ແລ້ວກໍ່ຕາມ, ຜູ້ທີ່ທຳການປຸກລະດົມນັ້ນ ຍັງຈະຕ້ອງໄດ້ເອົາໃຈໃສ່ຕື່ມສະພາບທາງດ້ານ ເສດຖະກິດ-ສັງຄົມ ອີກນຳເຊັ່ນ : ການມີເງື່ອນໄຂເຂົ້າເຖິງການຕະຫລາດ,

*27* *ໃນສະມັດຕະພາບຂອງອ້ອຍ 20-50 ໂຕນ/ຮຕ, ເນື້ອທີ່ໆທຳການຜລິດຕອນນັ້ນຕ້ອງໄດ້ເສຍແຮ່ທາດອາຫານຂອງດິນໄປ 200 ກລ/ຮຕ/ປີ, ສຳລັບການເຮັດໄຮ່ຈະເສຍແຮ່ທາດດັ່ງກ່າວໄປພຽງແຕ່ 15-20 ກລ/ຮຕ/ປີ (CIRAD, GRET et al. 2002). ຈົບຮອບວຽນຂອງການຜລິດໜຶ່ງ, ເນື້ອດິນທີ່ທຳການຜລິດດ້ວຍວິທີການຖາງປ່າເຮັດໄຮ່ຈະສູນເສຍແຮ່ທາດອາຫານໄປພຽງແຕ່ 40 ກລ ; ໃນເມື່ອເປັນຄືແນວນີ້ກໍ່ໝາຍວ່າປ່າເລົ່າຮອບສອງກໍ່ສາມາດເກີດຂຶ້ນໄດ້ໄວໃນລະຍະຕອນປະເປັນເຮື້ອນັ້ນ. ຖ້າຫາກເປັນເນື້ອທີ່ໆທຳການປູກອ້ອຍແລ້ວ, ການສູນເສຍແຮ່ທາດອາຫານຂອງດິນຈະມີເຖິງ 600 ກລ/ຮຕ ແລະ ໃນນີ້ກໍ່ມີພຽງແຕ່ຫຍ້າຄາເທົ່ານັ້ນທີ່ສາມາດເກີດຂຶ້ນມາຄຸມດິນ, ສ່ວນຕົ້ນໄມ້ໃຫຍ່ແມ່ນບໍ່ສາມາດຈະເກີດຂຶ້ນໄດ້ອີກ.*

ບັນດາເງື່ອນໄຂຂອງລາຄາ, ສິ່ງທີ່ມີຄວາມຈຳເປັນສຳລັບປະຊາຊົນ ແລະ ອື່ນໆ ຖ້າຫາກເຮົາບໍ່ເອົາໃຈໃສ່ໃນສິ່ງດັ່ງກ່າວນີ້ແລ້ວ ກໍ່ຈະເຮັດໃຫ້ສິ່ງທີ່ພວກເຮົາ ໄດ້ປຸກລະດົມໃຫ້ປະຊາຊົນທຳການຜລິດໄປນັ້ນກໍ່ ຈະບໍ່ເໝາະສົມກັບສະພາບແວດລ້ອມ, ແນ່ນອນປະຊາຊົນຈະບໍ່ຍອມຮັບເອົາໄປປະຕິບັດ ຊຶ່ງຜົນທີ່ຕາມມາກໍ່ຄື ຈະເຮັດໃຫ້ມີການສິ້ນຊັບສົມບັດຂອງລັດທີ່ມີນ້ອຍຢູ່ແລ້ວນັ້ນ ເປືອງໄປໂດຍໄຮ້ປະໂຫຍດ ແລະ ພ້ອມກັນນັ້ນກໍ່ຈະເຮັດໃຫ້ມີສະພາບຂາດຄວາມເຊື່ອໝັ້ນນຳກັນ ລະຫວ່າງການຈັດຕັ້ງ ແລະ ປະຊາຊົນຜູ້ທີ່ທຳການຜລິດນັ້ນ.

ໝາກແໜ່ງພັນທີ່ນຳມາປຸກລະດົມ ໃຫ້ປະຊາຊົນປູກຢູ່ເມືອງຜົ້ງສາລີ ເຫັນວ່າເປັນພືດເສດຖະກິດທີ່ ສາມາດເຂົ້າກັນ ໄດ້ກັບສະພາບທຳມະຊາດ ແລະ ສະພາບທາງດ້ານເສດຖະກິດ-ສັງຄົມທີ່ມີລັກສະນະພິເສດຂອງເມືອງຜົ້ງສາລີໄດ້ດີ. ການນຳໝາກແໜ່ງເຂົ້າມາປຸກລະດົມໃຫ້ປະຊາຊົນປູກແມ່ນຕົວຢ່າງໃນການດຳເນີນງານທີ່ມີຫລັກການວິທະຍາສາດ ຊຶ່ງວິທີການ ແລະ ຫລັກການໃນການດຳເນີນການຕ່າງໆອາດນຳໄປຈັດຕັ້ງປະຕິບັດໃນເຂດອື່ນໆໄດ້.

ການປຸກລະດົມໃຫ້ປະຊາຊົນຫັນມາທຳການຜລິດພືດເສດຖະກິດໃດໜຶ່ງ ມັນບໍ່ແມ່ນວຽກທີ່ງ່າຍດາຍເໝືອນກັນກັບສິ່ງທີ່ເຮົາຄິດ ; ມັນຈະໄດ້ຮັບຜົນສຳເລັດໄດ້ກໍ່ຕໍ່ເມື່ອປະຊາຊົນໄດ້ຍອມຮັບເອົາໄປເປັນ ເຈົ້າການໃນການຈັດຕັ້ງປະຕິບັດ. ຈາກບົດຮຽນທີ່ຖອດຖອນມາໄດ້ຈາກວຽກງານໝາກແໜ່ງຢູ່ຜົ້ງສາລີ ເພື່ອຢາກໃຫ້ການປຸກລະດົມປະຊາຊົນຫັນມາທຳການຜລິດໃດໜຶ່ງນັ້ນ ມັນຕ້ອງມີສາມເງື່ອນໄຂທີ່ສຳຄັນດັ່ງນີ້ :

1. ***ການຜະລິດເພື່ອໃຫ້ເປັນສິນຄ້າທີ່ທຳການປຸກລະດົມໄປນັ້ນຕ້ອງໃຫ້ມີເສດຖະກິດ*** ຫລາຍກວ່າການຜລິດດ້ວຍວິທີການຖາງປ່າເຮັດໄຮ່ ເມື່ອເບິ່ງໃສ່ຂອດອຸປະສັກຕົ້ນຕໍຂອງການຜລິດກະສິກຳທີ່ມີໃນເຂດນີ້ເຊັ່ນ : ແຮງງານ.
   ກ່ອນປະຊາຊົນຈະຍອມຮັບການຜລິດອັນໃໝ່ນຳໄປຈັດຕັ້ງປະຕິບັດໄດ້ນັ້ນ ລາຍໄດ້ທີ່ປະຊາຊົນຈະໄດ້ຮັບຈາກການຜລິດພືດເສດຖະກິດອັນໃໝ່ ຕໍ່ມື້ອອກແຮງງານນີ້ຈະຕ້ອງໃຫໄດ້ຫລາຍກວ່າ ລາຍໄດ້ທີ່ໄດ້ມາຈາກການຜລິດແບບດັ້ງເດີມທີ່ມີຢູ່ແລ້ວນັ້ນ, ໃນລະດັບຢ່າງໜ້ອຍ 14 000 ກີບ (1,3 ໂດລາ) ຕໍ່ວັນງານ (DUCOURTIEUX 2004).

2. ***ການຜະລິດເພື່ອໃຫ້ເປັນສິນຄ້າທີ່ຈະນຳໄປປຸກລະດົມໃຫ້ປະຊາຊົນທຳການຜລິດນັ້ນຈະຕ້ອງມີຄວາມຮັບປະກັນ*** ກວ່າການຜລິ ດດ້ວຍວິທີການຖ່າງປ່າເຮັດໄຮ່. ປະຊາຊົນຈະບໍ່ຍອມປະລະການຜລິດພືດທີ່ມີຄວາມຈຳເປັນໃນຊີວິດປະຈຳວັນ (ເຂົ້າກິນ) ໄປສູ່ການຜລິດທີ່ບໍ່ມີຄວາມຮັບປະກັນພໍ ຊຶ່ງໃນນັ້ນຜົນຜລິດທີ່ອກມາບໍ່ມີຄວາມແນ່ນອນ, ບາງປີໄດ້ດີ ແລະ ບາງປີບໍ່ໄດ້ດີ.
   ຄວາມສ່ຽງ ແລະ ຜົນເສຍຕ່າງໆທີ່ຈະຕ້ອງໄດ້ຫລີກລຽງໃຫ້ໄດ້ ກໍ່ມີ ຄວາມສ່ຽງ ແລະ ຜົນເສຍກ່ຽວກັບການຕະຫລາດ ແລະ ຄວາມບໍ່ແນ່ນອນທາງດ້ານເສດຖະກິດ (ການຂຶ້ນໆລົງໆຂອງລາຄາ, ຄວາມບໍ່ແນ່ນອນຂອງຄວາມຕ້ອງການ ຫລື ບໍ່ມີຄວາມຕ້ອງການເລີຍ ແລະ ອື່ນໆ...), ຕະຫລອດເຖິງຄວາມສ່ຽງ ແລະ ຜົນເສຍທາງດ້ານເງື່ອນໄຂທາງດ້ານທຳມະຊາດ (ສະພາບດິນຟ້າອາກາດ, ພະຍຸພະຍາດຕ່າງໆ...).

3. ***ການຜະລິດເພື່ອໃຫ້ເປັນສິນຄ້າທີ່ຈະນຳໄປປຸກລະດົມໃຫ້ປະຊາຊົນນຳໄປທຳການຜະລິດນັ້ນຈະຕ້ອງສະດວກໃນການເຄື່ອນຍ້າຍ.*** ເມືອງຜົ້ງສາລີ ເປັນເມືອງພູດອຍ, ປະຊາຊົນດຳລົງຊີວິດ້ວຍການຖາງປ່າເຮັດໄຮ່ ໃນເຂດທີ່ຫ່າງໄກສອກຫລີກ. ເງື່ອນໄຂໃນການເດີນທາງແມ່ນມີຄວາມຫຍຸ້ງຍາກ, ເມື່ອເປັນ

> ແນວນັ້ນ ເງື່ອນໄຂໃນການເຂົ້າຫາວຽກງານການຕະຫລາດກໍ່ຍິ່ງມີຄວາມຫຍຸ້ງຍາກຕື່ມອີກ ຈຳເປັນຈະຕ້ອງໄດ້ໃຊ້ເວລາຢ່າງຫລາຍຊົ່ວໂມງ ຫລື ຫລາຍມື້ ໃນເສັ້ນທາງທີ່ທຸລະກັນດານ ຂຶ້ນພູ ລົງຫ້ວຍ. ດັ່ງນັ້ນພືດເສກຖະກິດທີ່ຈະນຳລົງໄປປູກລະດົມໃຫ້ປະຊາຊົນທຳການຜະລິດນັ້ນຈະຕ້ອງມີຄວາມທົນທານ ແລະ ບໍ່ເໜົ່າເປື່ອຍງ່າຍ ເພື່ອຈະຮອງຮັບໄດ້ ສະພາບໃນການຂົນສົ່ງທີ່ມີຄວາມຫຍຸ້ງຍາກດັ່ງກ່າວ. ມູນຄ່າລາຄາຕໍ່ຫົວໜ່ວຍມວນສານ ແລະ ຕໍ່ຫົວໜ່ວຍບໍລິມາດ (ລາຄາ/ກລ ແລະ ລາຄາ/ມ$^3$) ຈະຕ້ອງສູງເພື່ອວ່າການຂົນສົ່ງ ຫລື ການແບກຫາບສິນຄ້ານັ້ນຈຶ່ງຈະມີເສດຖະກິດໄດ້.[28].

ແນ່ນອນໃນນີ້ ຖ້າເງື່ອນໄຂໜຶ່ງໃນສາມຫາກຂາດໄປ ການປູກລະດົມ ແລະ ສົ່ງເສີມໃຫ້ປະຊາຊົນທຳການຜລິດໃຫ້ເປັນສິນຄ້າກໍ່ຈະລົ້ມເຫລວໄປ.

# ສະຫລຸບ

ການນຳເອົາພືດເສດຖະກິດມາສົ່ງເສີມໃຫ້ປະຊາຊົນທຳການຜະລິດບໍ່ແມ່ນວິທີການທີ່ມີຄວາມຫຍຸ້ງຍາກເກີນໄປ, ມັນແຍ້ມໃຫ້ເຮົາເຫັນຜົນສຳເລັດທີ່ຈະບັນລຸໄດ້ ໃນນະໂຍບາຍການຢັບຢັ້ງບໍ່ໃຫ້ມີການຂະຫຍາຍໂຕຂອງເນື້ອທີ່ໃນການຖາງປ່າເຮັດໄຮ່. ແຕ່ກ່ອນຈະມີການສົ່ງເສີມໃຫ້ປະຊາຊົນທຳການຜະລິດໃດໜຶ່ງນັ້ນ ເຮົາຈະຕ້ອງໄດ້ທຳການສຶກສາລະອຽດສະພາບທາງດ້ານເສດຖະກິດ ແລະ ສັງຄົມ ແລະ ເຮົາຈະຕ້ອງໄດ້ທຳການຄົ້ນຄວ້າ ແລະ ທົດລອງໃນສະພາບຕົວຈິງຢູ່ພື້ນຖານບ້ານປະຊາຊົນສາກ່ອນ. ການຜະລິດທີ່ກຳນົດເອົາເປັນການຜູກຂາດສະເພາະການຜະລິດພືດອັນໃດອັນໜຶ່ງພຽງແຕ່ພືດອັນດຽວ ຈະບໍ່ສາມາດມີຄວາມຍືນຍົງໄດ້, ມັນຈະສ້າງແຕ່ຜົນເສຍທາງດ້ານເສດຖະກິດໃຫ້ແກ່ປະຊາຊົນ ການຫັນມາປູກພືດເສດຖະກິດນັ້ນຈະຕ້ອງມີການປະສົມປະສານກັນໄປຄຽງ ຄູ່ກັບວຽກງານການລ້ຽງສັດ ແລະ ການປູກພືດອື່ນໆຫລາຍໆອັນຫລາຍແນວທີ່ມີ ໃນລະບົບການພະລິດທີ່ເຄີຍປະຕິບັດກັນມາແຕ່ກ່ອນແລ້ວນັ້ນ. ບໍ່ວ່າໃນການກຳນົດແຜນການ ກໍ່ຄືໃນການລົງມືຈັດຕັ້ງປະຕິບັດຕົວຈິງຂອງແຜນການໃນ ການຊຸກຍູ້ ແລະ ສົ່ງເສີມໃຫ້ປະຊາຊົນທຳການຜະລິດໃຫ້ເປັນສິນຄ້າ ຈະຕ້ອງໄດ້ມີຈິດສຳນຶກສະເໝີວ່າ ຈະຕ້ອງສາມາດເພີ່ມລາຍຮັບໃຫ້ແກ່ປະຊາຊົນ ພ້ອມດຽວກັນນັ້ນ ການຜະລິດຄືດັ່ງກ່າວຈະຕ້ອງເປັນການຜລິດທີ່ສາມາດປົກປັກຮັກສາສະພາບແວດລ້ອມໄປໃນໂຕນຳອີກ.

ບັນດາວິທີການ ແລະ ຈິນຕະນາການ ໃນການຈັດຕັ້ງປະຕິບັດ ທີ່ຜ່ານມາລ້ວນແຕ່ເປັນການປະຕິບັດທີ່ຖືເອົາແບບດຽວກັບການປະຕິບັດທີ່ເຄີຍປະຕິບັດຜ່ານມາ ແລະ ບັນດາວິທີການດັ່ງກ່າວ ສ່ວນຫລາຍແລ້ວຜົນສຸດທ້າຍກໍ່ນຳໄປສູ່ຄວາມຫລົ້ມເຫລວ ແລະ ເປັນໄພຢ່າງຮ້າຍແຮງຕໍ່ປະຊາຊົນຜູ້ໄດ້ຮັບຜົນກະທົບກ່ອນໝູ່. ຜູ້ທີ່ດຳເນີນງານໃນການພັດທະນາ ກໍ່ຄືບັນດາໂຄງການຕ່າງໆ ຕະຫລອດເຖິງ ການຈັດຕັ້ງພັກລັດ ຈະເປັນຖືວ່າເປັນຜູ້ທີ່ມີປະສິດທິດພາບສູງ ຖ້າຫາກວ່າພາກສ່ວນດັ່ງກ່າວ ໃນການດຳເນີນງານວຽກງານພັດທະນາ ຫາກໄດ້ໃຫ້ຄວາມສຳຄັນຕໍ່ສະພາບແວດລ້ອມທາງດ້ານ ເສດຖະກິດ-ສັງຄົມ ຂອງລະບົບການຜະລິດກະສິກຳ ແລະ ໃຫ້ຄວາມສຳຄັນຕໍ່ປະຫວັດຄວາມເປັນມາຂອງມັນທີ່ມີຢູ່ໃນແຕ່ລະທ້ອງຖິ່ນ. ໃນເມື່ອຍອມຮັບຟັງຄຳຄິດຄຳເຫັນ ແລະ ເຂົ້າໃຈດີສະພາບຄວາມເປັນຈິງແລ້ວ, ຜູ້ທີ່ດຳເນີນງານໃນການພັດທະນາ ໂດຍສົມທົບກັບປະຊາຊົນ ກໍ່ມີ

---

*28 ຄວາມມີເສດຖະກິດໃນທີ່ນີ້ບໍ່ໄດ້ເວົ້າສະເພາະພືດເສດຖະກິດເທົ່ານັ້ນ ມັນຍັງກວມເຖິງສັດລ້ຽງອີກນຳ. ໃນນີ້ສັດລ້ຽງຈະຖືເອົາວ່າເປັນຜົນຜະລິດທີ່ສາມາດເຄື່ອນຍ້າຍໄດ້ດ້ວຍຕົວຂອງມັນເອງ ເຊັ່ນ : ສັດລ້ຽງຈຳພວກງົວ-ຄວາຍ ເຫັນວ່າມີທ່າແຮງເໝາະສົມດີກັບສະພາບພື້ນທີ່ເມືອງຜົ້ງສາລີ.*

ແຕ່ຈະພ້ອມກັນເສີມຂະຫຍາຍທັດສະນະຄິດປະດິດສ້າງໃນການດຳເນີນງານທາງດ້ານເຕັກນິກວິຊາການ ແລະ ເສີມຂະຫຍາຍໝາກຜົນທາງດ້ານເສດຖະກິດ ຊຶ່ງຈະເຮັດໃຫ້ສາມາດບັນລຸໄດ້ເປົ້າໝາຍຍຸດທະສາດຂອງລັດຖະບານ ໃນການລຶບລ້າງຄວາມທຸກຈົນ ແລະ ປົກປັກຮັກສາສະພາບແວດລ້ອມນັ້ນ.

# ເອກະສານອ້າງອີງ


ADB – Asian Development Bank. 1999. *Report and recommendation of the President to the Board of Directors on a proposed loan to the Lao People's Democratic Republic for the shifting cultivation stabilization pilot project*. Manilla: Asian Development Bank. 72 p.

ADB – Asian Development Bank. 2003. *Draft Country Strategy and Program Update - Lao People's Democratic Republic*. Manilla: Asian Development Bank. 98 p.

ALEXANDRE, J.-L. and EBERHARDT N. 1998. *Des systèmes agraires de la rive gauche de la Nam Ou*. Paris: CCL. 331 p.

AUBERTIN, C. 2003. *Cardamom (Amomum spp.) in the Lao People's Democratic Republic: the hazardous future of an agroforest system product* in *Forest products, livelihoods and conservation: Case studies of NTFP systems*. Volume 2 – Asia. Djakarta: CIFOR Publications: 22-38.

BABIN, P. 1999. *Etude du système agraire des terres hautes du Plateau des Bolovens*. Paris: INA P-G. Mémoire de Mastère. 106 p.

BAUDRAN, E. 2000. *Derrière la savane, la forêt*. Paris: CCL. 192 p.

CHAZEE, L. 1990. *Les mammifères du Laos et leur chasse*. Vientiane: UNDP. 69 p.

CHAZEE, L. 1998. *Evolution des systèmes de production ruraux en République Démocratique Populaire du Laos 1975-1995*. Paris: L'Harmattan. 430 p.

CIRAD, GRET *et al.* 2002. *Mémento de l'agronome*. Paris: Ministère des Affaires Etrangères - GRET - CIRAD. 1 691 p.

DE KONINCK, R. 1997. *Le recul de la forêt au Vietnam*. Ottawa: IDRC. 99 p.

DE KONINCK, R. *et al.* 2000. *Pégase: Pédagogie Asie du Sud-Est*. Université Laval (Québec) - Université du Québec (Montréal). [online 10/2003] URL: http://www.casa.umontreal.ca/pegase.

DUCOURTIEUX, O. 1994. *L'agriculture du Plateau des Bolovens*. Rome: FAO. 187 p.

DUCOURTIEUX, O. 2000. *Substitute cash crops for slash-and-burn agriculture: dream or reality?* in EC Workshop on Sustainable Rural Development in the Southeast Asia Mountainous Region: drawing lessons from experience. Hanoï: European Union. 5 p.

DUCOURTIEUX, O. 2004. *Shifting cultivation and Poverty: a complex issue* in Poverty Reduction and Shifting Cultivation Stabilization in the Uplands of Lao PDR: Technologies, approaches and methods for improving upland Livelihoods. Vientiane: NAFRI-Lao-Swedish Uplands Agriculture and Forestry Research Program. Forthcoming.

DUFUMIER, M. 1996. "Minorités ethniques et agriculture d'abattis-brûlis au Laos." *Cahier des sciences humaines*. 32(1): 195-208.

DUFUMIER, M. 1999. "La déforestation au Laos." *Globe mémoires* (2): 45-47.

GRIMEAUD, J. and MEAUX M.-H. 1999. *Diversité des situations agraires de la zone basse du plateau des Bolovens - sud Laos*. Montpellier: CNEARC/ESAT. Mémoire d'Ingénieur. 151 p.

KEONUCHAN, K. 2000. *The adoption of new agricultural practices in northern Laos: a political ecology of shifting cultivation*. Sydney: University of Sydney. PhD thesis. 225 p.

LAFFORT, J.-R. 1997. "L'agriculture montagnarde phunoï du nord du Laos: vers la fin de l'autosubsistance." *Agriculture & Développement* (16): 3-17.

LAFFORT, J.-R. and JOUANNEAU R. 1998. *Deux systèmes agraires de la province de Phongsaly*. Paris: CCL. 262 p.

LAO PDR – Lao People's Democratic Republic. 2003. *National Poverty Eradication Programme (NPEP)*. Vientiane: Lao PDR. 161 p.

MAF – Ministry of Agriculture & Forestry. 1999. *The Government's strategic vision for the agricultural sector: A discussion paper prepared for the Donor Round Table Conference*. Vientiane: Ministry of Agriculture & Forestry. 74 p.

MAF – Ministry of Agriculture & Forestry. 2002. *Agricultural Marketing in Lao PDR*. Vientiane: Ministry of Agriculture & Forestry, Department of Agriculture. 59 p.

MOA, B., VALENTIN, C. *et al.* 2002. "Flow Discharge and Sediment Yield from a Cultivated Catchment in the Northern Lao PDR." *The Lao Journal of Agriculture and Forestry* (5): 11-23.

NAFRI and CIRAD. 2003. *Développement rural en République Démocratique Populaire Lao - Positionnement du Programme National Agroécologie*. Vientiane: NAFRI – CIRAD. 12 p.

PELLIARD, D. 1998. *La diversité du plateau des Bolovens. Etude de deux agrosystèmes villageois entre Paksong et Laongam (Sud-Laos)*. Montpellier: ENESAD/CNEARC/ESAT. Mémoire d'Ingénieur. 135 p.

RAMAKRISHNAN, P. S. 1992. *Shifting Agriculture and Sustainable Development*. Paris: Unesco. Man and the Biosphere Series. 424 p.

RODER, W., Ed. 2001. *Slash-and-Burn Rice Systems in the Hills of Northern Lao PDR: Description, Challenges, and Opportunities*. Manilla: IRRI. 201 p.

SAINT-PIERRE, C. 1998. *Les produits végétaux paysans de Phongsaly et le marché chinois*. Montpellier: CCL – PDDP. 29 p.

SAINT-PIERRE, C. 2003. *Développer les produits végétaux paysans du district de Phongsaly et améliorer leur mise en marché*. Montpellier: Tercia - CCL – PDDP. 44 p.

UNDP – United Nations Development Programme. 1995. *Country Strategy Note (draft)*. Vientiane: UNDP. 38 p.

UNDP – United Nations Development Programme. 2002. *National Human Development Report Lao PDR 2001: Advancing Rural Development*. Vientiane: UNDP. 189 p.

UNDP – United Nations Development Programme. 2002. *Round table Process 2000-2002 (issue 20)*. Vientiane: UNDP. 4 p.

VAN KEER, K. 2003. *On-farm agronomic diagnosis of transitional upland rice swidden cropping systems in northern Thailand*. Leuven: Faculteit Landbouwkundige en Toegepaste Biologische Wetenschappen - Katholieke Universiteit Leuven. PhD thesis. 220 p.

VORAKHOUN, P. 2003. "Planted trees hit export market for the first time". *Vientiane Times 30/5-2/6/2003*. Vientiane: 1-2.

WATERSHED. 2000. "Aspects of forestry management in the Lao PDR.". *Wathershed* 5(3): 57-64.

ZAIFU, X. 1998. *From shifting cultivation to agroforestry in the mountain areas of Yunnan tropics*. Ottawa: IDRC. 7 p.

ZHAOHUA, Z. *et al.* 1998. *Overall study on agroforestry systems in China*. Ottawa: IDRC. 15 p.

ZHOU, S.-q. 1993. "Cultivation of Amomum villosum in tropical forests." *Forest Ecology and Management* (60): 157-162.

ZHOU, S.-q. *et al*. 1999. *A study on land suitability and site selection for Chinese cardamom cultivation in Phongsaly district, Phongsaly province of Laos*. Menglun: Xhishuangbanna Tropical Botanical Garden (XTBG), Chinese Academy of Sciences. 26 p.